**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**=====0=====**

**<u>ສຳນັກງານນາຍົກລັດຖະມົນຕີ</u>** ເລກທີ 362 /ນຍ

ນະຄອນຫຼວງວຽງຈັນ,ວັນທີ 19 10 2007

# ດຳລັດ

## ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ

- ອີ ງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສ.ປ.ປ.ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງໃໝ່ ເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005;
- ອີງຕາມ ການສະເໜີ ຂອງ ລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2373/ກງ, ລົງວັນທີ 2 / 10 / 2007.

## ນາຍົກລັດຖະມົນຕີ ອອກດຳລັດ :

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ວາງອອກເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ກ່ຽວກັບຫຼັກການ, ນະໂຍບາຍ, ລະບຽບການ ແລະ ມາດຕະການລະອຽດ ໃນການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການຈໍລະຈອນສິນຄ້າ, ເຄື່ອງຂອງຢູ່ພາຍໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໂດຍສະເພາະທີ່ນອນຢູ່ໃນລະບອບງົດເກັບພາສີ ຫຼື ສິນຄ້າທີ່ບໍ່ທັນໄດ້ປະກອບເອກະສານແຈ້ງພາສີ, ເພື່ອເປັນການຊຸກຍູ້, ສົ່ງເສີມການຜະລິດ, ການບໍລິການ, ການປະຕິບັດນະໂຍບາຍສົ່ງເສີມ, ປົກປ້ອງການຜະລິດສິນຄ້າ ແລະ ການດຳເນີນທຸລະກິດຢູ່ພາຍໃນປະເທດ, ຊຸກຍູ້ການສົ່ງອອກ, ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ແນໃສ່ເຮັດໃຫ້ເສດຖະກິດພາຍໃນປະເທດຂະຫຍາຍຕົວຢ່າງຕໍ່ເນື່ອງ ທັງເປັນການປະຕິບັດພັນທະເຂົ້າງົບປະມານແຫ່ງລັດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະ ໃຫ້ສອດຄ່ອງກັບລະບຽບການຂອງສາກົນທີ່ ສ.ປ.ປ.ລາວ ໄດ້ຮ່ວມລົງນາມ ຫຼື ເຂົ້າເປັນພາຄີຂອງສັນຍາ ແລະ ສົນທິສັນຍາຕ່າງໆ.

### ມາດຕາ 2. ອານາເຂດພາສີ

ອານາເຂດພາສີ ແມ່ນພື້ນແຜ່ນດິນອັນຄົບຖ້ວນຂອງ ສ.ປ.ປ.ລາວ ຊຶ່ງກວມທັງເຂດນ່ານຟ້າ, ນ່ານນ້ຳ ຊາຍແດນ ຕິດກັບຕ່າງປະເທດ ທີ່ຮັບຮູ້ຕາມກົດໝາຍສາກົນ ເພື່ອກຳນົດຂອບເຂດການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 .

ໃນການປະຕິບັດພັນທະກໍລະນີທີ່ລັດຖະບານ ສ.ປ.ປ.ລາວ ໄດ້ຮ່ວມລົງນາມໃນຂໍ້ຕົກລົງວ່າດ້ວຍການອຳນວຍຄວາມສະດວກ, ການຂົນສົ່ງສິນຄ້າ ແລະ ຄົນຂ້າມແດນກັບບັນດາປະເທດຕ່າງໆລຸ່ມແມ່ນ້ຳຂອງ ໃນການຮ່ວມກັນກວດກາສິນຄ້າ, ເຄື່ອງຂອງ ແລະ ຄົນ ຢູ່ຈຸດດຽວ, ຄັ້ງດຽວ ແມ່ນອະນຸຍາດໃຫ້ເຈົ້າໜ້າທີ່ພາສີ ຂອງ ສ.ປ.ປ ລາວ ອອກໄປປະຕິບັດໜ້າທີ່ນອກອານາເຂດພາສີ ຂອງ ສ.ປ.ປ.ລາວ ເພື່ອປະຕິບັດວຽກງານ ຮ່ວມກັນກັບເຈົ້າໜ້າທີ່ພາສີ ຂອງປະເທດຄູ່ຮ່ວມລົງນາມໃນຂໍ້ຕົກລົງ ແລະ ອະນຸຍາດໃຫ້ເຈົ້າໜ້າທີ່ພາສີ ຂອງປະເທດຄູ່ຮ່ວມລົງນາມໃນຂໍ້ຕົກລົງເຂົ້າມາປະຕິບັດວຽກງານຮ່ວມກັນກັບ ເຈົ້າໜ້າທີ່ພາສີ ຂອງສ.ປ.ປ ລາວ ເຊັ່ນດຽວກັນໃນສະຖານທີ່ ທີ່ທັງສອງຝ່າຍໄດ້ກຳນົດໄວ້.

## ມາດຕາ 3. ການປ່ຽນແປງອັດຕາພາສີໃນກໍລະນີຈຳເປັນ

ໃນກໍລະນີທີ່ມີຄວາມຈຳເປັນຮີບດ່ວນ ຕ້ອງໄດ້ປ່ຽນແປງອັດຕາພາສີ, ລັດຖະບານສາມາດ ສະເໜີ ຫຼຸດ ຫຼື ເພີ່ມອັດຕາພາສີ, ປ່ຽນແປງອັດຕາພາສີ ທີ່ກຳນົດໄວ້ໃນປື້ມ ສາລະບານອັດຕາພາສີ ຊຶ່ງເກັບຕາມອັດຕາສ່ວນຮ້ອຍ ຂອງມູນຄ່າແຈ້ງພາສີ ມາເປັນການເກັບຕາມອັດຕາເດັດຖານ (ໝາຍເຖິງການກຳນົດຄ່າພາສີແລະພັນທະອື່ນໆ ເປັນຈຳ ນວນເງິນ ຕໍ່ຫົວໜ່ວຍສິນຄ້າ, ເຄື່ອງຂອງ) ຕໍ່ຄະນະປະຈຳສະພາແຫ່ງຊາດ ຕາມທີ່ກຳນົດໄວ້ໃນ ມາດຕາ 6 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005.

ອັດຕາພາສີ ທີ່ກຳນົດໄວ້ໃນປື້ມສາລະບານອັດຕາພາສີ ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ອົງການປົກຄອງທຸກຂັ້ນ ປ່ຽນແປງອັດຕາພາສີ ຈະດ້ວຍວິທີໃດກໍຕາມ ເຊັ່ນ: ຫຼຸດ ຫຼື ເພີ່ມອັດຕາພາສີໂດຍກົງ, ຕົກລົງຍົກເວັ້ນ, ຫຼຸດຫຼືເພີ່ມມູນຄ່າແຈ້ງ, ປະລິມານ, ບໍລິມາດ, ນ້ຳໜັກຕໍ່ສິນຄ້າ, ເຄື່ອງຂອງ ທີ່ຕ້ອງເສຍພາສີແລະພັນທະອື່ນໆ ຕາມລະບຽບກົດໝາຍ ໂດຍເດັດຂາດ, ຖ້າເກີດເປັນຜົນເສຍຫາຍແກ່ຜົນປະໂຫຍດຂອງຊາດ ກໍຄືລາຍຮັບ ງົບປະມານແຫ່ງລັດ ຈະຖືວ່າເປັນການສໍ້ລາດບັງຫຼວງ ແລະ ຈະຖືກປະຕິບັດວິໄນ ຫຼື ລົງໂທດ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ມາດຕາ 4. ມູນຄ່າແຈ້ງພາສີຂາເຂົ້າ

ການກຳນົດມູນຄ່າແຈ້ງພາສີສຳລັບສິນຄ້າ, ເຄື່ອງຂອງນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ແມ່ນການກຳນົດຫລັກການກ່ຽວກັບການປະເມີນມູນຄ່າສິນຄ້າ,ເຄື່ອງຂອງ ນຳເຂົ້າເພື່ອຈຸດປະສົງໃນການແຈ້ງພາສີ.

ມູນຄ່າແຈ້ງພາສີ ສຳລັບສິນຄ້າ, ເຄື່ອງຂອງທີ່ນຳເຂົ້າມາ ສປປລາວ ຈະຖືກກຳນົດມູນຄ່າແຈ້ງພາສີ ໂດຍໃຫ້ສອດຄ່ອງກັບວິທີການດັ່ງລຸ່ມນີ້ :

(1). ມູນຄ່າແຈ້ງພາສີສໍາລັບສິນຄ້າ, ເຄື່ອງຂອງທີ່ນໍາເຂົ້າ ຕ້ອງແມ່ນມູນຄ່າຊື້-ຂາຍ ຊຶ່ງແມ່ນລາຄາຊື້-ຂາຍສິນຄ້າທີ່ໄດ້ຊໍາລະຕົວຈິງ ຫຼື ລາຄາທີ່ຈະຕ້ອງຊໍາລະສໍາລັບສິນຄ້າ, ເຄື່ອງຂອງນໍາເຂົ້າ.

(2). ຖ້າວ່າມູນຄ່າແຈ້ງສິນຄ້າ, ເຄື່ອງຂອງນໍາເຂົ້າ ບໍ່ສາມາດກໍານົດໄດ້ພາຍໃຕ້ຂໍ້ (1) ຂ້າງເທິງນັ້ນ, ມູນຄ່າແຈ້ງພາສີ ຕ້ອງແມ່ນມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນໍາເຂົ້າທີ່ຄືກັນ.

(3). ຖ້າວ່າມູນຄ່າແຈ້ງສິນຄ້າ, ເຄື່ອງຂອງນໍາເຂົ້າ ບໍ່ສາມາດກໍານົດໄດ້ພາຍໃຕ້ຂໍ້ (1) ແລະ ຂໍ້ (2) ຂ້າງເທິງນັ້ນ, ມູນຄ່າແຈ້ງພາສີ ຕ້ອງແມ່ນມູນຄ່າຊື້-ຂາຍສິນຄ້າ, ເຄື່ອງຂອງນໍາເຂົ້າທີ່ຄ້າຍຄືກັນ,

(4). ຖ້າວ່າມູນຄ່າແຈ້ງສິນຄ້າ, ເຄື່ອງຂອງນໍາເຂົ້າ ບໍ່ສາມາດກໍານົດໄດ້ພາຍໃຕ້ຂໍ້ (1), (2) ຫຼື (3) ຂ້າງເທິງນັ້ນ, ມູນຄ່າແຈ້ງພາສີ ຕ້ອງອີງໃສ່ວິທີຫັກລົບຄ່າໃຊ້ຈ່າຍບາງຢ່າງອອກຈາກລາຄາສິນຄ້າ, ເຄື່ອງຂອງ ຢູ່ ສປປລາວ.

(5). ຖ້າວ່າມູນຄ່າແຈ້ງສິນຄ້າ, ເຄື່ອງຂອງນໍາເຂົ້າ ບໍ່ສາມາດກໍານົດໄດ້ພາຍໃຕ້ຂໍ້ (1), (2), (3) ຫຼື (4) ຂ້າງເທິງນັ້ນ, ມູນຄ່າແຈ້ງພາສີ ຕ້ອງອີງໃສ່ວິທີການໃຊ້ລາຄາຄໍານວນມູນຄ່າການຜະລິດສິນຄ້າ, ເຄື່ອງຂອງທີ່ນໍາເຂົ້າ.

(6). ຖ້າວ່າມູນຄ່າແຈ້ງສິນຄ້າ, ເຄື່ອງຂອງນໍາເຂົ້າ ບໍ່ສາມາດກໍານົດໄດ້ໂດຍອີງໃສ່ວິທີຕ່າງໆທີ່ກ່າວມາຂ້າງເທິງນັ້ນ, ມູນຄ່າແຈ້ງພາສີຈະຕ້ອງຖືກກໍານົດດ້ວຍວິທີການທີ່ສົມເຫດ ສົມຜົນໂດຍສອດຄ່ອງກັບບັນດາຫຼັກການຕ່າງໆທີ່ກໍານົດໄວ້ໃນ ຂໍ້ (1), (2), (3), (4) ແລະ (5) ຂ້າງເທິງນັ້ນ, ບົນພື້ນຖານຂໍ້ມູນຂ່າວສານທີ່ມີຢູ່ ສປປລາວ.

1. ໃນ 6 ວິທີການດັ່ງກ່າວ ຕ້ອງນໍາມາປະຕິບັດຢ່າງຕໍ່ເນື່ອງຕາມລໍາດັບ ແຕ່ (1) ເຖິງ (6), ສ່ວນວິທີການທີ (4) ແລະ (5) ສາມາດສະຫຼັບການນໍາໃຊ້ວິທີໃດກ່ອນ ຫຼື ຫຼັງ ກໍໄດ້ ຖ້າວ່າມີການຮ້ອງຂໍຂອງຜູ້ນໍາເຂົ້າ.

ລັດຖະມົນຕີວ່າການກະຊວງການເງິນ ຈະເປັນຜູ້ອອກບົດແນະນໍາລະອຽດກ່ຽວກັບການຈັດຕັ້ງປະຕິບັດມາດຕານີ້ ພ້ອມທັງອອກລະບຽບການຕ່າງຫາກ ໃນການກໍານົດລາຄາຕໍ່າສຸດສໍາລັບບາງຊະນິດສິນຄ້າ, ເຄື່ອງຂອງໃນແຕ່ລະໄລຍະທີ່ເຫັນວ່າມີຜົນກະທົບ ແລະ ມີຄວາມສ່ຽງສູງຕໍ່ການກວດກາ ແລະ ຄຸ້ມຄອງ.

## ມາດຕາ 5. ການຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ

ພື້ນຖານການຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 22 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ ລົງວັນທີ 20/05/2005 ນັ້ນ ຕ້ອງເປັນເງິນກີບ ແບບທະວີຄູນ ໂດຍຖືເອົາສະກຸນເງິນໂດລາສະຫະລັດ ຄູນໃຫ້ອັດຕາຂາຍຂອງທະນາຄານ ໃນວັນບັນທຶກໃບແຈ້ງພາສີເປັນລາຍລະອຽດ ຄູນໃຫ້ອັດຕາພາສີ ແລະ ພັນທະອື່ນໆ ຕາມທີ່ກໍານົດໄວ້ໃນປຶ້ມສາລະບັນອັດຕາພາສີ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ.

ເພື່ອສະດວກໃນການສັງລວມຕົວເລກສະຖິຕິ ແລະ ຄິດໄລ່ຄ່າພາສີແລະພັນທະອື່ນໆ, ການປັດຕົວເລກ ຫລື ການມົນຕົວເລກ ໃຫ້ປະຕິບັດດັ່ງນີ້, ຄື :

- ຕົວເລກລາຄາເງິນຕາຕ່າງປະເທດ ຖ້າມີເລກເສດ ບໍ່ໃຫ້ມີການປັດ, ໃຫ້ຮັກສາເລກເສດໄວ້ ຫລັງຈຸດ 2 ຕົວເລກ.

- ຕົວເລກມູນຄ່າແຈ້ງພາສີເປັນເງິນກີບ ຖ້າເປັນເລກເສດ ໃຫ້ປັດເປັນຕົວເລກມົນ, ຄື : ແຕ່ 1 ຫາ 50 ໃຫ້ປັດເປັນ 50, ແຕ່51 ຫາ 99 ໃຫ້ປັດເປັນ 100.

- ຕົວເລກຄ່າພາສີ-ອາກອນ ໃຫ້ປັດເປັນເລກມົນຫົວຮ້ອຍ, ຄື : ແຕ່ 1 ຫາ 99 ໃຫ້ປັດເປັນ 100.

## ມາດຕາ 6. ວິທີເສຍພາສີແລະ ພັນທະອື່ນໆ

ພາຍຫຼັງທີ່ເຈົ້າໜ້າທີ່ພາສີໄດ້ບັນທຶກໃບແຈ້ງພາສີເປັນລາຍລະອຽດ ຄ່າພາສີ ແລະ ພັນທະອື່ນໆ ຕ້ອງຊຳລະໃຫ້ຄົບຖ້ວນໂດຍທັນທີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005.

ໃນກໍລະນີ ຜູ້ແຈ້ງພາສີຊຳລະຄ່າພາສີ ແລະ ພັນທະອື່ນໆ ບໍ່ທັນຕາມກຳນົດເວລາທີ່ກ່າວມາຂ້າງເທິງນີ້ ຕ້ອງໄດ້ເສຍຄ່າປັບໃໝເທົ່າກັບ 0,01% ຂອງຄ່າພາສີ ແລະ ພັນທະອື່ນໆຕໍ່ວັນທີ່ມີການຊັກຊ້າ ແຕ່ສູງສຸດບໍ່ໃຫ້ເກີນ ເຈັດ ວັນ ໂດຍບໍ່ນັບວັນພັກລັດຖະການ, ຖ້າກາຍກຳນົດດັ່ງກ່າວ ສິນຄ້າ, ເຄື່ອງຂອງ ຈະຕົກຢູ່ໃນການຄວບຄຸມສະເພາະຂອງເຈົ້າໜ້າທີ່ພາສີ ແລະ ປະຕິບັດຕາມມາດຕະການທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍວ່າດ້ວຍພາສີ.

## ມາດຕາ 7. ການນຳສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີ

ການນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕາ 25 ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຕ້ອງປະຕິບັດຢ່າງເຂັ້ມງວດ ຄືດັ່ງນີ້:

1. ຜູ້ນຳເຂົ້າຫາກມີຈຸດປະສົງຂໍອະນຸຍາດນຳເອົາສິນຄ້າ, ເຄື່ອງຂອງອອກຈາກ ສາງ ຫຼື ດ່ານພາສີກ່ອນການເສຍພາສີ ແລະ ພັນທະອື່ນໆກໍໄດ້ ຕ້ອງປະກອບໃບແຈ້ງພາສີຄ້ຳປະກັນພ້ອມທັງຄັດຕິດເອກະສານອະນຸຍາດກ່ຽວກັບການນຳເຂົ້າສິນຄ້າ, ເຄື່ອງຂອງໃຫ້ຄົບຖ້ວນ ແລ້ວຍື່ນຕໍ່ລັດຖະການພາສີ ບ່ອນນຳເຂົ້າສິນຄ້າ, ເຄື່ອງຂອງ ພິຈາລະນາອະນຸມັດຕາມລະບຽບການ ແລະ ວາງເງິນຄ້ຳປະກັນເທົ່າກັບ ຮ້ອຍຊາວສ່ວນຮ້ອຍ ຂອງຄ່າພາສີ ແລະ ພັນທະອື່ນໆທີ່ຈະຕ້ອງຊຳລະ.

- ສະເພາະການນຳເຂົ້າຕາມລະບອບຍົກເວັ້ນ ຫຼື ງົດເກັບພາສີ ຂອງອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ພະນັກງານອົງການຈັດຕັ້ງສາກົນ ຫຼື ຜູ້ທີ່ໄດ້ຮັບອະພິສິດທາງການທູດ ອາດຈະອະນຸຍາດໃຫ້ຄ້ຳປະກັນດ້ວຍການຈັດຕັ້ງ, ນິຕິບຸກຄົນ ຫຼື ບຸກຄົນ ທີ່ເຊື່ອຖືກໍໄດ້.

2. ພາຍຫຼັງທີ່ລັດຖະການພາສີໄດ້ພິຈາລະນາອະນຸມັດ ແລະ ວາງເງິນຄ້ຳປະກັນເປັນທີ່ຮຽບຮ້ອຍແລ້ວ ເຈົ້າໜ້າທີ່ພາສີ ຈະທຳການກວດກາສິນຄ້າ, ເຄື່ອງຂອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຜູ້ນຳເຂົ້າ ຕ້ອງນຳເອົາສິນຄ້າ, ເຄື່ອງຂອງອອກຈາກສາງ ຫຼື ດ່ານພາສີ ໂດຍທັນທີ.

3. ພາຍໃນກຳນົດ ເຈັດ ວັນ ນັບແຕ່ວັນທີ່ໄດ້ບັນທຶກໃບແຈ້ງພາສີຄ້ຳປະກັນເປັນຕົ້ນໄປ ໂດຍ ບໍ່ນັບວັນພັກລັດຖະການ ເຈົ້າຂອງສິນຄ້າ, ເຄື່ອງຂອງ ຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ (ບ.40,...) ຍື່ນຕໍ່ເຈົ້າໜ້າທີ່ພາສີຈຸດບ່ອນນຳເຂົ້າ ເພື່ອຊຳລະຄ່າພາສີ ແລະ ພັນທະອື່ນໆ, ໃນກໍລະນີ ມີການຄ້ຳປະກັນດ້ວຍເງິນ ກໍ່ຈະຖືກໄລ່ລຽງສົ່ງຄືນ ແລະ ຖືວ່າໃບແຈ້ງພາສີຄ້ຳປະກັນກໍຈະສິ້ນສຸດລົງ. ເມື່ອກາຍກຳນົດເວລາດັ່ງກ່າວ ລັດຖະການພາສີ ຈະຮັກສາເງິນຄ້ຳປະກັນນັ້ນໄວ້ຕື່ມອີກ ພາຍໃນ ຊາວສາມ ວັນ ບໍ່ນັບວັນພັກລັດຖະການ ນັບແຕ່ວັນໝົດກຳນົດຂອງໃບແຈ້ງພາສີຄ້ຳປະ ກັນເປັນຕົ້ນໄປ, ພາຍໃນຊາວສາມວັນ ຖ້າເຈົ້າຂອງສິນຄ້າ, ເຄື່ອງຂອງມາປະກອບໃບແຈ້ງພາສີເປັນລາຍລະອຽດ ເພື່ອສະສາງໃບແຈ້ງພາສີຄ້ຳປະກັນ, ນອກຈາກປະຕິບັດຕາມລະບຽບການ ຂອງພາສີ ຫຼື ເສຍພາສີ ແລະ ພັນທະອື່ນໆ ຄົບຖ້ວນຕາມລະບຽບການແລ້ວ ຍັງຈະຕ້ອງຊຳລະຄ່າ ປັບໃໝເທົ່າກັບ 0,01% ຕໍ່ວັນ ຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ມີການຊັກຊ້າ ນັບແຕ່ວັນໝົດກຳນົດໃນໃບແຈ້ງພາສີຄ້ຳປະກັນເປັນຕົ້ນໄປ. ຖ້າກາຍກຳນົດ ຊາວສາມ ວັນ ລັດຖະການພາສີ ຈະມອບເງິນຄ້ຳປະກັນເທົ່າກັບຄ່າພາສີ ແລະ ພັນທະອື່ນໆ ເຂົ້າງົບປະມານແຫ່ງລັດໂດຍທັນທີ. ສ່ວນເງິນຄ້ຳປະກັນທີ່ຍັງເຫຼືອ ຈະຄິດໄລ່ຄ່າປັບໃໝຕາມລະບຽບການ.

## ມາດຕາ 8. ການກວດກາຄືນການແຈ້ງເສຍພາສີ

ທຸກໆການແຈ້ງພາສີຈະຕ້ອງຢູ່ພາຍໃຕ້ການກວດກາຄືນ ຂອງລັດຖະການພາສີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005. ສະນັ້ນ ຜູ້ສົ່ງອອກ-ນຳເຂົ້າ ຫຼື ຕົວແທນທີ່ໄດ້ຮັບມອບໝາຍເປັນລາຍລັກອັກ ສອນ ຕ້ອງເປັນຜູ້ຮັບຜິດຊອບໂດຍກົງຕໍ່ທຸກໆຂໍ້ມູນທີ່ຕົນເອງໄດ້ແຈ້ງລົງໃນໃບແຈ້ງພາສີເປັນລາຍລະອຽດເຊັ່ນ: ຕົ້ນກຳເນີດ, ລະຫັດສິນຄ້າ, ມູນຄ່າແຈ້ງພາສີ, ອັດຕາພາສີ-ອາກອນຂາເຂົ້າ, ຄ່າພາສີ ແລະ ພັນທະອື່ນໆ ຫຼື ຂໍ້ມູນຕ່າງໆກ່ຽວກັບການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງທີ່ຕົນໄດ້ລົງລາຍເຊັນຢັ້ງຢືນ ແລະ ຍື່ນຕໍ່ເຈົ້າໜ້າທີ່ພາສີ ເພື່ອກວດກາ ແລະ ບັນທຶກໃບແຈ້ງພາສີເປັນລາຍລະອຽດ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 1, 2, 3 ແລະ 4, ພາກທີ III ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ແລ້ວນັ້ນ. ເພື່ອເຮັດໃຫ້ຂັ້ນຕອນການແຈ້ງພາສີມີຄວາມສະດວກ ແລະ ວ່ອງໄວໃນການນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີ, ເຈົ້າໜ້າທີ່ພາສີປະຈຳດ່ານສົ່ງອອກ-ນຳເຂົ້າ ຈະຮັບເອົາຂໍ້ມູນການແຈ້ງເບື້ອງຕົ້ນຕາມເອກະສານປະກອບ ທີ່ຜູ້ແຈ້ງພາສີໄດ້ແຈ້ງໄວ້ເທົ່ານັ້ນ, ແຕ່ບໍ່ໝາຍຄວາມວ່າເຈົ້າໜ້າທີ່ພາສີປະຈຳດ່ານຮັບຮອງຄວາມຖືກຕ້ອງຂອງຂໍ້ມູນໃນໃບແຈ້ງພາສີເປັນລາຍລະອຽດດັ່ງກ່າວ. ເພາະສະນັ້ນ ທຸກໆໃບແຈ້ງພາສີເປັນລາຍລະອຽດ ຈະຖືກກວດກາຄືນ ໂດຍລັດຖະການພາສີ ພາຍໃນກຳນົດເວລາ ສາມ ປີ ນັບແຕ່ວັນໄດ້ບັນທຶກໃບແຈ້ງພາສີເປັນລາຍລະອຽດເປັນຕົ້ນໄປ. ການກວດກາຄືນຂອງເຈົ້າໜ້າທີ່ພາສີ ສາມາດດຳເນີນການກວດກາຢູ່ຕາມສຳນັກງານຂອງຜູ້ດຳເນີນທຸລະກິດຂາເຂົ້າ-ຂາອອກ, ສະຖານທີ່ເກັບມ້ຽນສິນຄ້າ, ໂຮງຈັກໂຮງງານ, ຫ້າງຮ້ານຈຳໜ່າຍສິນຄ້າ, ເຄື່ອງຂອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ຜູ້ບໍລິການແຈ້ງພາສີ, ຜູ້ຮັບສົ່ງ, ເຈົ້າຂອງສິນຄ້າ, ເຄື່ອງ

ຂອງຕົວຈິງ ເພື່ອກວດກາປື້ມບັນຊີ, ເອກະສານ, ຂໍ້ມູນອື່ນໆທີ່ກ່ຽວຂ້ອງ ແລະ ສິນຄ້າ, ເຄື່ອງຂອງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 26, 27, 28 ແລະ 67 ຂອງກົດໝາຍວ່າດ້ວຍພາສີ.

ຖ້າຜົນການກວດກາຂອງລັດຖະການພາສີມີຂໍ້ມູນຫຼັກຖານຢັ້ງຢືນຢ່າງໜັກແໜ້ນວ່າຂໍ້ມູນ ຂ້າງເທິງ ທີ່ຜູ້ສົ່ງອອກ-ນໍາເຂົ້າ ຫຼື ຕົວແທນ ທີ່ໄດ້ແຈ້ງໄວ້ບໍ່ຖືກຕ້ອງຕາມຄວາມຈິງ ຊຶ່ງມີຜົນສະ ທ້ອນຕໍ່ຄ່າພາສີ ແລະ ພັນທະອື່ນໆ, ລັດຖະການພາສີ ຈະແຈ້ງຜົນຂອງການກວດກາ ແລະ ຄິດໄລ່ຄືນໃໝ່ ໃຫ້ຜູ້ສົ່ງອອກ-ນໍາເຂົ້າ ຫຼື ຕົວແທນ ເປັນລາຍລັກອັກສອນ ໂດຍມີກໍານົດເວລາ ເພື່ອເຂົ້າມາຊໍາລະຄ່າພາສີ ແລະ ພັນທະອື່ນໆທີ່ຜິດດ່ຽງ ພ້ອມທັງຄ່າປັບໃໝໜຶ່ງເທົ່າຂອງຄ່າພາ ສີ ແລະ ພັນທະອື່ນໆທີ່ຖືກຫຼີກລ້ຽງ, ເຊື່ອງອໍາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 52 ຂອງກົດໝາຍ ວ່າດ້ວຍພາສີ ຫາກບໍ່ມີຜົນສະທ້ອນຕໍ່ຄ່າພາສີ ແລະ ພັນທະອື່ນໆຈະໄດ້ປັບໃໝ ຕັກເຕືອນແຕ່ 150.000 - 5.000.000 ກີບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 19 ຂອງດໍາລັດສະບັບນີ້.

ໃນກໍລະນີ ຜູ້ກະທໍາຜິດ ບໍ່ປະຕິບັດຕາມແຈ້ງການຂອງລັດຖະການພາສີ ຈະຖືກນໍາໃຊ້ ມາດຕະການເພີ່ມເຕີມ ທີ່ໄດ້ກໍານົດໄວ້ໃນມາດຕາ 59, 67, 92 ແລະ 93 ຂອງກົດໝາຍວ່າດ້ວຍ ພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20/05/2005.

## ມາດຕາ 9. ການສະເໜີຄືນກ່ຽວກັບການແຈ້ງພາສີ

ຜູ້ແຈ້ງພາສີ ມີສິດສະເໜີຄືນ ກ່ຽວກັບການແຈ້ງພາສີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຕ້ອງປະຕິບັດ ຕາມຂັ້ນຕອນດັ່ງນີ້:

1. ໃນເມື່ອມີຂໍ້ຂັດແຍ້ງກ່ຽວກັບການກໍານົດແຫຼ່ງກໍາເນີດສິນຄ້າ, ລະຫັດສິນຄ້າ ແລະ ມູນ ຄ່າພາສີ ຫຼື ກ່ຽວກັບຜົນຂອງການກວດກາ ແລະ ການຄິດໄລ່ຄ່າຜິດດ່ຽງລວມທັງການປັບໃໝອື່ນໆ ໂດຍເຈົ້າໜ້າທີ່ພາສີ, ຜູ້ແຈ້ງພາສີມີສິດສະເໜີຄືນຕໍ່ຫົວໜ້າກົມພາສີ ຢ່າງເປັນລາຍລັກອັກສອນ ຕາມແບບຟອມທີ່ກໍານົດໄວ້ຂອງພາສີ ພ້ອມຄັດຕິດຂໍ້ມູນທີ່ກ່ຽວຂ້ອງ ແລະ ຫຼັກຖານທີ່ເຊື່ອຖືໄດ້ ພ້ອມທັງສະເໜີວິທີການແກ້ໄຂ ພາຍໃນກໍານົດ ສາມສິບ ວັນ ນັບແຕ່ວັນໄດ້ບັນ ທຶກໃບແຈ້ງພາສີ ເປັນລາຍລະອຽດ ຫຼື ວັນໄດ້ຮັບແຈ້ງການຜົນຂອງການກວດກາ ຫຼື ການຄິດໄລ່ຄ່າຜິດດ່ຽງ ຈາກ ລັດຖະການພາສີ.

2. ຫົວໜ້າກົມພາສີ ຈະພິຈາລະນາ ແລະ ໃຫ້ຄໍາຕົກລົງຢ່າງຊ້າບໍ່ໃຫ້ເກີນ ສາມສິບ ວັນ ນັບ ແຕ່ວັນທີ່ໄດ້ລົງທະບຽນຮັບເອກະສານສະເໜີເປັນຕົ້ນໄປ. ລະບຽບການແກ້ໄຂ ແມ່ນອີງຕາມ ວິທີ ການພິສູດຂໍ້ມູນຫຼັກຖານທາງດ້ານເຕັກນິກວິຊາການ ທີ່ໄດ້ກໍານົດໄວ້ໃນລະບຽບການ, ຖ້າ ການສະ ເໜີມີຫຼັກຖານຖືກຕ້ອງແລະພຽງພໍ ກໍຈະໄດ້ຮັບການພິຈາລະນາແກ້ໄຂ, ໃນກໍລະນີ ບໍ່ສາມາດແກ້ ໄຂໄດ້ຕາມການສະເໜີ ຫົວໜ້າກົມພາສີ ຈະແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມທັງອະ ທິບາຍເຫດຜົນຢ່າງລະອຽດ ເພື່ອສະເໜີຂັ້ນເທິງຕໍ່ໄປ.

- ໃນກໍລະນີ ຜູ້ແຈ້ງພາສີ ບໍ່ຍິນຍອມຕໍ່ການຕົກລົງຂອງ ຫົວໜ້າກົມພາສີ ມີສິດສະເໜີ ຢ່າງ ເປັນລາຍລັກອັກສອນ ຕໍ່ລັດຖະມົນຕີວ່າການ ກະຊວງການເງິນ ພາຍໃນກໍານົດ ສາມສິບ ວັນ ນັບແຕ່ໄດ້ຮັບຄໍາຕົກລົງຂອງຫົວໜ້າກົມພາສີເປັນຕົ້ນໄປ.

3. ລັດຖະມົນຕີວ່າການກະຊວງການເງິນ ຈະພິຈາລະນາ ແລະ ໃຫ້ຄຳຕົກລົງກ່ຽວກັບການສະເໜີດັ່ງກ່າວ ພາຍໃນກຳນົດ ສາມສິບ ວັນ ນັບແຕ່ວັນລົງທະບຽນການສະເໜີເປັນຕົ້ນໄປ. ຜູ້ແຈ້ງພາສີບໍ່ເຫັນດີຕໍ່ຄຳຕົກລົງຂອງລັດຖະມົນຕີວ່າການ ກະຊວງການເງິນ ສາມາດຍື່ນຄຳຮ້ອງຟ້ອງຕໍ່ສານ ພາຍໃນກຳນົດ ສິບຫ້າ ວັນ ຫຼັງຈາກໄດ້ຮັບແຈ້ງການກ່ຽວກັບຄຳຕົກລົງດັ່ງກ່າວເປັນຕົ້ນໄປ.

## ມາດຕາ 10. ການນຳເຂົ້າ ເພື່ອວາງສະແດງ, ສຶກສາ, ທົດລອງ

ການນຳເອົາສິນຄ້າ, ເຄື່ອງຂອງ ຈາກຕ່າງປະເທດ ເຂົ້າມາໃນ ສ.ປ.ປ.ລາວ ເປັນການຊົ່ວຄາວ ເພື່ອວາງສະແດງ, ການສຶກສາ ແລະ ການທົດລອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂໍ້ 3.(ຂ) ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຕ້ອງປະຕິບັດຕາມລະບຽບການ ດັ່ງນີ້ :

1. ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າມາເພື່ອຮັບໃຊ້ການວາງສະແດງ, ການສຶກສາ, ການທົດລອງ ທີ່ບໍ່ມີລັກສະນະທາງການຄ້າ.

ກ່ອນຈະນຳເອົາສິນຄ້າ, ເຄື່ອງຂອງດັ່ງກ່າວ ເຂົ້າມາ ສ.ປ.ປ.ລາວ ຕ້ອງມີເອກະສານຢັ້ງຢືນ ແລະ ການຄ້ຳປະກັນ ຈາກການຈັດຕັ້ງທີ່ກ່ຽວຂ້ອງ ພ້ອມແຈ້ງລາຍການສິນຄ້າ, ເຄື່ອງຂອງລົງໃນແບບຟອມ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ພາສີ ພິຈາລະນາ. ເມື່ອສິ້ນສຸດການວາງສະແດງ ຕ້ອງໄດ້ນຳອອກຄືນໂດຍທັນທີ ຕາມຈຳນວນ ແລະ ສະພາບເດີມ ໃນເວລາທີ່ໄດ້ກຳນົດໄວ້ ແລະ ໃນສັນຍາຄ້ຳປະກັນ.

2. ສິນຄ້າ, ເຄື່ອງຂອງທີ່ນຳເຂົ້າມາງານວາງສະແດງເພື່ອຈຳໜ່າຍ ຕ້ອງແຈ້ງລາຍການສິນຄ້າ, ເຄື່ອງຂອງລົງໃນແບບຟອມ ທີ່ທາງການພາສີກຳນົດ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ພາສີ ກວດກາ ແລະ ຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ ແລ້ວວາງເງິນຄ້ຳປະກັນເທົ່າກັບຈຳນວນເງິນ ທີ່ຄິດໄລ່ ແລະ ບວກເພີ່ມ 20%. ພາຍຫຼັງເຈົ້າໜ້າທີ່ພາສີທຳການກວດກາ ແລະ ອະນຸມັດແລ້ວ ຕ້ອງນຳເອົາສິນຄ້າ, ເຄື່ອງຂອງດັ່ງກ່າວ ພ້ອມເອກະສານໄປແຈ້ງຕໍ່ເຈົ້າໜ້າທີ່ພາສີ ປະຈຳງານວາງສະແດງ ຫຼື ລັດຖະການພາສີ ບ່ອນທີ່ໃກ້ສຸດ ເພື່ອຕິດຕາມກວດກາ ແລະ ຄຸ້ມຄອງ.

ເມື່ອສິ້ນສຸດງານວາງສະແດງ ຖ້າມີການຈຳໜ່າຍສິນຄ້າ, ເຄື່ອງຂອງ ຕ້ອງໄດ້ແຈ້ງພາສີເປັນລາຍລະອຽດ ຕໍ່ເຈົ້າໜ້າທີ່ພາສີ ທີ່ປະຈຳຢູ່ໃນສະຖານທີ່ຈັດງານ ຫຼື ຫ້ອງການພາສີບ່ອນໃກ້ສຸດ ເພື່ອຊຳລະຄ່າພາສີ ແລະ ພັນທະອື່ນໆຢ່າງຄົບຖ້ວນ; ແລ້ວນຳເອົາເອກະສານພ້ອມຫຼັກຖານຢັ້ງຢືນການເສຍພາສີ ແລະ ພັນທະອື່ນໆ ພ້ອມທັງສິນຄ້າ, ເຄື່ອງຂອງ ໃນກໍລະນີທີ່ຈຳໜ່າຍບໍ່ໝົດໄປແຈ້ງຕໍ່ເຈົ້າໜ້າທີ່ປະຈຳດ່ານ ຈຸດບ່ອນນຳເຂົ້າ ເພື່ອໄລ່ລຽງຖອນເງິນຄ້ຳປະກັນຄືນ.

## ມາດຕາ 11. ການນຳເອົາວັດຖຸສິ່ງຂອງເຂົ້າມາຜະລິດ, ປະກອບ, ດັດແປງ ເພື່ອສົ່ງອອກ.

ການນຳເຂົ້າວັດຖຸສິ່ງຂອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂໍ້ 3.(ຄ) ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຕ້ອງປະຕິບັດຕາມລະບຽບການ ດັ່ງນີ້:

1. ການນຳເອົາວັດຖຸດິບເຂົ້າມາໃນ ສ.ປ.ປ.ລາວ ເພື່ອທຳການຜະລິດເພື່ອສົ່ງອອກ ຕາມຂໍ້ຜູກພັນ ຂອງຜູ້ສັ່ງຊື້ຜະລິດຕະພັນຢູ່ຕ່າງປະເທດ, ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດຕາມລະບອບນຳເຂົ້າຊົ່ວຄາວ (ບ.50) ຍື່ນຕໍ່ເຈົ້າໜ້າທີ່ພາສີ ບ່ອນດ່ານນຳເຂົ້າ ໂດຍຄັດຕິດແຜນການນຳເຂົ້າ, ແຜນການຜະລິດ, ສູດຄິດໄລ່ ສິ້ນເປືອງການຜະລິດ ທີ່ຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ແລະ ສັນຍາຄ້ຳປະ ກັນນຳລັດຖະການພາສີ. ການນຳເຂົ້າດັ່ງກ່າວແມ່ນຈະໄດ້ງົດເກັບພາສີ ແລະ ພັນທະອື່ນໆ ພາຍໃນກຳນົດ ຫົກ ເດືອນ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງເຈົ້າໜ້າທີ່ພາສີ.

ເມື່ອຄົບກຳນົດ ຫົກ ເດືອນ ຜູ້ນຳເຂົ້າບໍ່ສາມາດປຸງແຕ່ງເປັນຜະລິດຕະພັນສົ່ງ ອອກໄດ້ນັ້ນ ສາມາດຕໍ່ອາຍຸ ຕື່ມອີກໄດ້ ບໍ່ເກີນ ສາມ ເດືອນ ແຕ່ຕ້ອງວາງເງິນຄ້ຳປະກັນນຳລັດຖະການພາສີເສຍກ່ອນ ແລະ ຕ້ອງປະຕິບັດ ຕາມລະບຽບການລຸ່ມນີ້:

- ຕ້ອງມາແຈ້ງຕໍ່ລັດຖະການພາສີ ເພື່ອວາງເງິນຄ້ຳປະກັນ ຕາມຈຳນວນເງິນ ທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ (ບ.50) ໃນເວລານຳເຂົ້າ, ຈຳນວນເງິນດັ່ງກ່າວ ລັດຖະການພາສີ ຈະຮັກສາໄວ້ໃນບັນຊີລໍຖ້າ;

- ຖ້າມາແຈ້ງຊັກຊ້າຈະໄດ້ເສຍຄ່າປັບໃໝ 0,01% ຕໍ່ວັນຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ (ບ.50) ສຳລັບເງິນຄ່າປັບໃໝ ຈະໄດ້ມອບເຂົ້າງົບປະມານຕາມລະບຽບການ;

- ພາຍໃນກຳນົດ ສາມ ເດືອນ ຫາກມີການສົ່ງຜະລິດຕະພັນອອກ ເງິນຄ້ຳປະກັນຈະຖືກໄລ່ລຽງສົ່ງຄືນຕາມຈຳນວນສົ່ງອອກຕົວຈິງໃຫ້ແກ່ເຈົ້າຂອງ, ຫາກຄົບກຳນົດ ສາມ ເດືອນ ບໍ່ສົ່ງອອກ, ຈຳນວນເງິນດັ່ງກ່າວ ຈະຖືກມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນໂດຍທັນທີ;

- ຖ້າບໍ່ມາແຈ້ງ ຫຼື ມີການຊື້-ຂາຍ ຫຼື ນຳໃຊ້ບໍ່ຖືກເປົ້າໝາຍ ນອກຈາກເສຍພາສີ ແລະ ພັນທະອື່ນໆແລ້ວ ຍັງຈະໄດ້ເສຍຄ່າປັບໃໝໜຶ່ງເທົ່າຂອງຄ່າພາສີ ແລະ ພັນທະອື່ນໆ, ຖານລະເມີດລະບຽບການນຳເຂົ້າຊົ່ວຄາວ ຕາມທີ່ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີ ເລກທີ 05/ສພຊ ລົງວັນທີ 20.05.2005.

2. ການນຳເອົາວັດຖຸສິ່ງຂອງເຂົ້າມາໃນ ສ.ປ.ປ.ລາວ ເພື່ອປະກອບເປັນຜະລິດຕະພັນສົ່ງອອກ ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ ຕາມລະບອບນຳເຂົ້າ ຊົ່ວຄາວ (ບ.50) ຍື່ນຕໍ່ເຈົ້າໜ້າທີ່ພາສີ ບ່ອນດ່ານນຳເຂົ້າ ໂດຍຄັດຕິດແຜນການນຳເຂົ້າ, ແຜນການຜະລິດ, ຈຳນວນລາຍການສິ້ນສ່ວນ ເພື່ອມາປະກອບເປັນໜຶ່ງຫົວ ໜ່ວຍຜະລິດຕະພັນ ຕາມການກຳນົດຂອງຂະແໜງການທີ່ກ່ຽວຂ້ອງ ແລະ ສັນຍາຄ້ຳປະກັນນຳລັດຖະການພາສີ. ການນຳເຂົ້າດັ່ງກ່າວ ແມ່ນຈະໄດ້ງົດເກັບພາສີ ແລະ ພັນທະອື່ນໆ ພາຍໃນກຳນົດ ຫົກສິບ ວັນ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງເຈົ້າໜ້າທີ່ພາສີ.

ເມື່ອຄົບກຳນົດ ຫົກສິບ ວັນ ຜູ້ນຳເຂົ້າບໍ່ສາມາດປະກອບເປັນຜະລິດຕະພັນ ສົ່ງອອກໄດ້ນັ້ນ ສາມາດຕໍ່ອາຍຸ ຕື່ມອີກໄດ້ ແຕ່ບໍ່ໃຫ້ເກີນ ສາມສິບ ວັນ ແຕ່ຕ້ອງວາງເງິນຄ້ຳປະກັນນຳລັດຖະການພາສີເສຍກ່ອນ ແລະ ຕ້ອງປະຕິບັດຕາມລະບຽບການ ລຸ່ມນີ້:

- ຕ້ອງມາແຈ້ງຕໍ່ລັດຖະການພາສີ ເພື່ອວາງເງິນຄໍ້າປະກັນ ຕາມຈຳນວນເງິນ ທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ ໃນເວລານຳເຂົ້າ, ຈຳນວນເງິນດັ່ງກ່າວ ລັດຖະການພາສີຈະຮັກສາໄວ້ໃນບັນຊີລໍຖ້າ;

- ຖ້າມາແຈ້ງຊັກຊ້າຈະໄດ້ເສຍຄ່າປັບໃໝ 0,01% ຕໍ່ວັນ ຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ (ບ.50) ສຳລັບເງິນຄ່າປັບໃໝຈະໄດ້ມອບເຂົ້າງົບປະມານຕາມລະບຽບການ;

- ພາຍໃນກຳນົດ ສາມສິບ ວັນ ຫາກມີການສົ່ງຜະລິດຕະພັນອອກ ເງິນຄໍ້າປະກັນຈະຖືກໄລ່ລຽງສົ່ງຄືນ ຕາມຈຳນວນສົ່ງອອກຕົວຈິງ ໃຫ້ແກ່ເຈົ້າຂອງ, ຫາກຄົບກຳນົດ ສາມສິບ ວັນບໍ່ສົ່ງອອກ, ຈຳນວນເງິນດັ່ງກ່າວ ຈະຖືກມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນໂດຍທັນທີ;

- ຖ້າບໍ່ມາແຈ້ງ ຫຼື ມີການຊື້-ຂາຍ ຫຼື ນຳໃຊ້ບໍ່ຖືກເປົ້າໝາຍ ນອກຈາກເສຍພາສີ ແລະພັນທະອື່ນໆແລ້ວ ຍັງຈະໄດ້ເສຍຄ່າປັບໃໝໜຶ່ງເທົ່າ ຂອງຄ່າພາສີ ແລະ ພັນທະອື່ນໆ ຖານລະເມີດລະບຽບການນຳເຂົ້າຊົ່ວຄາວ ຕາມທີ່ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີສະບັບເລກທີ 05/ສພຊ, ລົງວັນທີ 20.05.2005.

3. ການນຳເອົາວັດຖຸສິ່ງຂອງເຂົ້າມາເພື່ອດັດແປງ ຫຼື ສ້ອມແປງ ແລ້ວນຳອອກຄືນ ຕ້ອງມີການອະນຸຍາດ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຕ້ອງເຮັດສັນຍາຄໍ້າປະກັນນຳ ລັດຖະການພາສີ ເພື່ອອະນຸຍາດນຳເຂົ້າຕາມລະບອບຊົ່ວຄາວ ຊຶ່ງມີກຳນົດ ສີ່ສິບຫ້າ ວັນ ໂດຍງົດເກັບພາສີແລະ ພັນທະອື່ນໆ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງເຈົ້າ ໜ້າທີ່ພາສີ.

ເມື່ອຄົບກຳນົດເວລາດັ່ງກ່າວແລ້ວ ຜູ້ນຳເຂົ້າບໍ່ສາມາດດັດແປງ ຫຼື ສ້ອມ ແປງສົ່ງອອກຄືນໄດ້ນັ້ນ ສາມາດຕໍ່ອາຍຸຕື່ມອີກໄດ້ ແຕ່ບໍ່ໃຫ້ເກີນ ສາມສິບ ວັນ ແຕ່ຕ້ອງວາງເງິນຄໍ້າປະກັນນຳລັດຖະການພາສີເສຍກ່ອນ ແລະ ຕ້ອງປະຕິບັດຕາມ ລະບຽບການລຸ່ມນີ້:

- ຕ້ອງມາແຈ້ງຕໍ່ລັດຖະການພາສີ ເພື່ອວາງເງິນຄໍ້າປະກັນ ຕາມຈຳນວນເງິນ ທີ່ໄດ້ຄິດໄລ່ໄວ້ ໃນໃບແຈ້ງພາສີເປັນລາຍລະອຽດຂອງລະບອບຊົ່ວຄາວໃນເວລານຳເຂົ້າ ຈຳນວນເງິນດັ່ງກ່າວລັດຖະການພາສີ ຈະຮັກສາໄວ້ໃນບັນຊີລໍຖ້າ;

- ຖ້າມາແຈ້ງຊັກຊ້າຈະໄດ້ເສຍຄ່າປັບໃໝ 0,01% ຕໍ່ວັນ ຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ (ບ.50) ສຳລັບເງິນຄ່າປັບໃໝຈະໄດ້ມອບເຂົ້າງົບປະມານຕາມລະບຽບການ;

- ພາຍໃນກຳນົດ ສາມສິບ ວັນ ຫາກມີການສົ່ງຜະລິດຕະພັນອອກ ເງິນຄໍ້າປະກັນ ຈະຖືກໄລ່ລຽງສົ່ງຄືນ ຕາມຈຳນວນສົ່ງອອກຕົວຈິງ ໃຫ້ແກ່ເຈົ້າຂອງ, ຫາກຄົບກຳນົດ ສາມສິບ ວັນບໍ່ສົ່ງອອກ ຈຳນວນເງິນດັ່ງກ່າວ ຈະຖືກມອບເຂົ້າງົບປະມານແຫ່ງລັດ ໂດຍທັນທີ.

- ຖ້າບໍ່ມາແຈ້ງ ຫຼື ມີການຊື້-ຂາຍ ຫຼື ນຳໃຊ້ບໍ່ຖືກເປົ້າໝາຍ ນອກຈາກເສຍພາສີ ແລະພັນທະອື່ນໆແລ້ວ ຍັງຈະໄດ້ເສຍຄ່າປັບໃໝໜຶ່ງເທົ່າ ຂອງຄ່າພາສີ ແລະ ພັນ ທະອື່ນໆ ຖານລະເມີດລະບຽບການນຳເຂົ້າຊົ່ວຄາວ ຕາມທີ່ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີສະບັບເລກທີ 05/ສພຊ, ລົງວັນທີ 20.05.2005.

## ມາດຕາ 12. ການນຳເຂົ້າຊົ່ວຄາວສຳລັບກົນຈັກໜັກ:

ການນຳເຂົ້າຊົ່ວຄາວກົນຈັກໜັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂໍ້ 3.(၅) ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005, ແມ່ນຜູ້ທີ່ມີເງື່ອນໄຂ ເຊັ່ນ:

ບັນດາບໍລິສັດ ທີ່ໄດ້ຮັບໂຄງການປະມູນສາກົນໃນບ້ວງເງິນຊ່ວຍເຫຼືອ, ກູ້ຢືມ ຫຼື ບໍລິສັດຂອງຕ່າງປະເທດ ທີ່ມີສັນຍາກັບລັດຖະບານ ສ.ປ.ປ.ລາວ ໃນການສຳປະທານ, ສຳຫຼວດ ອອກແບບ, ກໍ່ສ້າງ ຫຼື ພັດທະນາໂຄງການສາມາດນຳເອົາກົນຈັກໜັກ ເຊັ່ນ: ລົດດູດ, ລົດກວາດ, ລົດຍົກ, ລົດເຄຣນ, ລົດຈົກ, ລົດຕັກ, ລົດໂລ, ລົດດ້າມ, ລົດຊີແຕັກ, ລົດລາກແກ່ ແລະ ລົດວິຊາສະເພາະອື່ນໆ ເຂົ້າມາໃນ ສ.ປ.ປ.ລາວ ເປັນການຊົ່ວຄາວ ຕາມອາຍຸຂອງສັນຍາທີ່ເຊັນກັບລັດຖະບານ, ແຜນແມ່ບົດຂອງໂຄງການ, ຂະໜາດຂອງທຶນ, ບໍລິມາດວຽກຂອງໂຄງການ, ສັນຍາກັບຂະແໜງການກ່ຽວຂ້ອງ ໂດຍມີກຳນົດເວລາທີ່ແນ່ນອນ ຕາມກົດໝາຍແລ້ວ ແມ່ນບໍ່ເກີນ 02 ປີ ໃນກຳນົດສັນຍາດັ່ງກ່າວ ຈະຖືກງົດເກັບພາສີ ແລະ ພັນທະອື່ນໆ ແຕ່ຕ້ອງປະຕິບັດຕາມລະບຽບການດັ່ງລຸ່ມນີ້ :

- ຜູ້ນຳເຂົ້າຕ້ອງປະກອບເອກະສານອະນຸຍາດຂ້າງເທິງຢ່າງຄົບຖ້ວນ.

- ຕ້ອງເຮັດສັນຍາຄ້ຳປະກັນນຳລັດຖະການພາສີ ວ່າຈະນຳໃຊ້ຢູ່ໃນໂຄງການທີ່ອະນຸຍາດ ແລະ ນຳອອກຄືນພາຍໃນກຳນົດເວລາຕາມຈຳນວນ ແລະ ສະພາບເດີມ.

- ຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ (ບ.50) ຍື່ນຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານເພື່ອພິຈາລະນາອະນຸຍາດ.

ກ່ອນໝົດອາຍຸສັນຍາຄ້ຳປະກັນ ຖ້າຜູ້ນຳເຂົ້າມີຈຸດປະສົງຢາກຂໍຕໍ່ອາຍຸຂອງສັນຍາຄ້ຳປະກັນ ຕ້ອງຍື່ນໃບສະເໜີຢ່າງເປັນລາຍລັກອັກສອນ ພ້ອມຄັດຕິດຄຳເຫັນດີຈາກຂະແໜງການກ່ຽວຂ້ອງຕໍ່ລັດຖະການພາສີ ເພື່ອພິຈາລະນາ. ຖ້າລັດຖະການພາສີອະນຸຍາດໃຫ້ຕໍ່ ຜູ້ນຳເຂົ້າຕ້ອງວາງເງິນຄ້ຳປະກັນຕາມລະບຽບການ ແຕ່ຈະໄດ້ຄິດໄລ່ ຫັກອັດຕາສ່ວນຫຼຸດຕາມອາຍຸການນຳເຂົ້າຊົ່ວຄາວ; ພື້ນຖານທີ່ຈະນຳມາຄິດໄລ່ອັດຕາສ່ວນຫຼຸດ ແມ່ນອີງໃສ່ລວມຍອດຄ່າພາສີ ແລະ ພັນທະອື່ນໆ ທີ່ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ (ບ.50) ເວລານຳເຂົ້າ. ຈຳນວນເງິນຄ້ຳປະກັນ ລັດຖະການພາສີ ຈະຮັກສາໄວ້ໃນບັນຊີລໍຖ້າ ຕາມກຳນົດເວລາທີ່ອະນຸຍາດ ແລະ ກໍຈະຖືກໄລ່ລຽງສົ່ງຄືນໃນເວລານຳອອກ. ຖ້າການຍື່ນໃບສະເໜີຂໍຕໍ່ອາຍຸສັນຍາຄ້ຳປະກັນມີການຊັກຊ້າ ຈະໄດ້ເສຍຄ່າປັບໃໝ 0,01% ຕໍ່ວັນ ຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ມີການຊັກຊ້າ. ສຳລັບເງິນຄ່າປັບໃໝຈະໄດ້ມອບເຂົ້າງົບປະມານຕາມລະບຽບການ.

ລາຍລະອຽດຂອງຕາຕະລາງຄິດໄລ່ອັດຕາສ່ວນຫຼຸດ ເພື່ອວາງເງິນຄ້ຳປະກັນ ແລະ ການໄລ່ລຽງສົ່ງຄືນ ໃນເວລານຳອອກ ດັ່ງນີ້:

ກ. <u>ຕາຕະລາງຄິດໄລ່ອັດຕາສ່ວນຫຼຸດ ເພື່ອວາງເງິນຄ້ຳປະກັນ</u>

| ອາຍຸການນຳເຂົ້າຊົ່ວຄາວ | ເປີເຊັນສ່ວນຫລຸດ |
|---|---|
| ນັບແຕ່ 03 ເດືອນລົງມາ | 40% |
| ເກີນ 03 ເດືອນ ຫາ 06 ເດືອນ | 35% |
| ເກີນ 06 ເດືອນ ຫາ 01 ປີ | 25% |
| ເກີນ 01 ປີ ຫາ 01 ປີ 06 ເດືອນ | 15% |

| | |
|---|---|
| ເກີນ 01 ປີ 06 ເດືອນ ຫາ 02 ປີ | 10% |
| ເກີນ 02 ປີ | ບໍ່ໄດ້ຫັກສ່ວນຫລຸດ |

ຂ. ຕາຕະລາງໄລ່ລຽງສົ່ງຄືນເງິນຄ້ຳປະກັນໃນເວລານຳອອກ

| ໄລຍະການຕໍ່ອະນຸຍາດ | ອັດຕາຄິດໄລ່ສົ່ງຄືນ |
|---|---|
| ໄລຍະການອະນຸຍາດ 03 ເດືອນລົງມາ | 90% |
| ໄລຍະການອະນຸຍາດເກີນ 03 ເດືອນ ຫາ 06 ເດືອນ | 80% |
| ໄລຍະເກີນ 06 ເດືອນ ຫາ 01 ປີ | 70% |
| ໄລຍະເກີນ 01 ປີ ຫາ 01 ປີ 06 ເດືອນ | 65% |
| ໄລຍະເກີນ 01 ປີ 06 ເດືອນ ຫາ 2 ປີ | 55% |
| ໄລຍະເກີນ 02 ປີ ຫາ 03 ປີ | 45% |
| ໄລຍະເກີນ 03 ປີ ຫາ 04 ປີ | 35% |
| ໄລຍະເກີນ 04 ປີ ຫາ 05 ປີ | 25% |
| ຖ້າເກີນ 05 ປີ ຂຶ້ນໄປ | ບໍ່ໄດ້ສົ່ງຄືນຄ່າພາສີ ແລະ ພັນທະອື່ນໆ |

ກ່ອນໝົດອາຍຸສັນຍາຄ້ຳປະກັນ ແຕ່ຜູ້ນຳເຂົ້າໄດ້ຮັບໂຄງການໃໝ່ ທີ່ມີສັນຍາກັບລັດຖະບານ ມີຈຸດປະສົງ ຢາກໂອນກົນຈັກໜັກ ຈາກໂຄງການເກົ່າໄປຮັບໃຊ້ໂຄງການໃໝ່ ຕ້ອງຍື່ນໃບສະເໜີຢ່າງເປັນລາຍລັກອັກສອນ ຕໍ່ລັດຖະການພາສີ ເພື່ອພິຈາລະນາຕາມລະບຽບການດັ່ງນີ້:

1. ໃນກໍລະນີ ມີການວາງເງິນຄ້ຳປະກັນ ຕ້ອງໄດ້ໄລ່ລຽງສະສາງເງິນຄ້ຳປະກັນ ຕາມຕາຕະລາງ ຂ ຂາດຕົວເສຍກ່ອນ.
2. ເສຍຄ່າປັບໃໝຕາມມາດຕາ 51 ຂອງກົດໝາຍວ່າດ້ວຍພາສີ.
3. ຕ້ອງເຮັດສັນຍາຄ້ຳປະກັນນຳລັດຖະການພາສີ ວ່າຈະນຳໃຊ້ຢູ່ໃນໂຄງການ ທີ່ອະນຸຍາດ ແລະ ນຳອອກຄືນພາຍໃນກຳນົດເວລາຕາມຈຳນວນ ແລະ ສະພາບເດີມ.
4. ວາງເງິນຄ້ຳປະກັນ ຕາມຕາຕະລາງ ກ ຂ້າງເທິງນັ້ນ.
5. ເອກະສານອະນຸຍາດຈາກຂະແໜງການກ່ຽວຂ້ອງ.
6. ລັດຖະການພາສີ ຈະໄດ້ພິຈາລະນາອອກເອກະສານອະນຸຍາດໃຫ້ຕາມລະບຽບການ.

## ມາດຕາ 13. ການນຳເຂົ້າຊົ່ວຄາວພາຫະນະ ທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ.

ການນຳເຂົ້າຊົ່ວຄາວພາຫະນະ ທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂໍ້ 3.(ງ) ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ແມ່ນຜູ້ທີ່ມີເງື່ອນໄຂ ເຊັ່ນ:

ບັນດາບໍລິສັດ ທີ່ໄດ້ຮັບໂຄງການປະມູນສາກົນໃນບ້ວງເງິນຊ່ວຍເຫຼືອ, ກູ້ຢືມ ຫຼື ບໍລິສັດຂອງຕ່າງປະເທດ ທີ່ມີສັນຍາກັບລັດຖະບານ ສ.ປ.ປ.ລາວ ໃນການສຳປະທານ, ສຳຫຼວດ, ກໍ່ສ້າງ ຫຼື ພັດທະນາໂຄງການ ທີ່ໄດ້ຮັບອະນຸຍາດນຳເຂົ້າພາຫະນະຮັບໃຊ້ການຜະລິດທາງອ້ອມ ຫຼື

ຮັບໃຊ້ບໍລິການ ເຊັ່ນ: ປະເພດ ລົດເກັງ, ລົດຈິບ, ລົດກະບະ, ລົດຕູ້, ລົດບັສ ແລະ ອື່ນໆ ຕາມລະບຽບການນຳເຂົ້າຊົ່ວຄາວ ທີ່ມີກຳນົດເວລາອັນແນ່ນອນ ຕາມກົດໝາຍແລ້ວ ແມ່ນບໍ່ເກີນ 02 ປີ ແຕ່ໃນກໍລະນີ ເປັນໂຄງການໄລຍະຍາວສາມາດພິຈາລະນາໃຫ້ນຳໃຊ້ເກີນກຳນົດດັ່ງກ່າວ ໂດຍອີງຕາມອາຍຸສັນຍາຂອງໂຄງການ. ການນຳເຂົ້າຊົ່ວຄາວ ສຳລັບພາຫະນະດັ່ງກ່າວນີ້ ຈະຕ້ອງໄດ້ປະຕິບັດຕາມລະບຽບການ ດັ່ງລຸ່ມນີ້ :

- ຜູ້ນຳເຂົ້າຕ້ອງປະກອບເອກະສານອະນຸຍາດຈາກຂະແໜງການກ່ຽວຂ້ອງຢ່າງຄົບຖ້ວນ.

- ຕ້ອງເຮັດສັນຍາຄ້ຳປະກັນນຳລັດຖະການພາສີ ວ່າຈະນຳໃຊ້ຢູ່ໃນໂຄງການທີ່ອະນຸຍາດ ແລະ ນຳອອກຄືນພາຍໃນກຳນົດເວລາຕາມຈຳນວນ ແລະ ສະພາບເດີມ.

- ຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ ຍື່ນຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ເພື່ອເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການກຳນົດ.

ກ່ອນວັນສິ້ນສຸດສັນຍາຄ້ຳປະກັນ ຜູ້ນຳເຂົ້າຕ້ອງນຳເອົາພາຫະນະພ້ອມເອກະສານທີ່ກ່ຽວຂ້ອງໄປຍັງດ່ານພາສີ ເພື່ອປະກອບໃບແຈ້ງພາສີເປັນລາຍລະອຽດຍື່ນຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານ ພິຈາລະນາອະນຸຍາດນຳພາຫະນະອອກຄືນ, ພາຍຫຼັງທີ່ເຈົ້າໜ້າທີ່ພາສີໄດ້ບັນທຶກຜົນການກວດກາ ແລະ ຢັ້ງຢືນວ່າ ພາຫະນະດັ່ງກ່າວ ໄດ້ສົ່ງອອກຈາກດິນແດນ ສ.ປ.ປ.ລາວ ແລ້ວ ຜູ້ນຳເຂົ້າສາມາດນຳເອົາເອກະສານດັ່ງກ່າວ ໄປຍື່ນຕໍ່ລັດຖະການພາສີ ທີ່ດ່ານຂຶ້ນກັບ ເພື່ອໄລ່ລຽງຖອນເງິນຄ່າພາສີ ແລະ ພັນທະອື່ນໆ ພາຍໃນກຳນົດ ຊາວເອັດ ວັນ ຕາມອັດຕາຄິດໄລ່ສົ່ງຄືນ ທີ່ກຳນົດໄວ້ໃນຕາຕະລາງລຸ່ມນີ້:

ກ. <u>ການນຳເຂົ້າລົດ ທີ່ມີສະພາບເຕັກນິກໃໝ່ 100%</u>

| ໄລຍະການນຳໃຊ້ຢູ່ ສ.ປ.ປ.ລາວ | ອັດຕາຄິດໄລ່ສົ່ງຄືນ |
|---|---|
| ໄລຍະ 06 ເດືອນລົງມາ (183 ວັນ) | 90% ຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ມອບ |
| ໄລຍະເກີນ 06 ເດືອນ ເຖິງ 01 ປີ | 80% -”- |
| ໄລຍະເກີນ 01 ປີ ເຖິງ 02 ປີ | 70% -”- |
| ໄລຍະເກີນ 02 ປີ ເຖິງ 03 ປີ | 55% -”- |
| ໄລຍະເກີນ 03 ປີ ເຖິງ 04 ປີ | 45% -”- |
| ໄລຍະເກີນ 04 ປີ ເຖິງ 05 ປີ | 35% -”- |
| ຖ້າເກີນ 05 ປີ ຂຶ້ນໄປ | ບໍ່ໄດ້ສົ່ງຄືນຄ່າພາສີ ແລະ ພັນທະອື່ນໆ |

ຂ. <u>ການນຳເຂົ້າລົດເກົ່າທີ່ໃຊ້ແລ້ວ</u>

| ໄລຍະການນຳໃຊ້ຢູ່ ສ.ປ.ປ.ລາວ | ອັດຕາຄິດໄລ່ສົ່ງຄືນ |
|---|---|
| ໄລຍະ 06 ເດືອນລົງມາ (183 ວັນ) | 50% ຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ມອບ |
| ໄລຍະເກີນ 06 ເດືອນ ເຖິງ 01 ປີ | 40% -”- |
| ໄລຍະເກີນ 01 ປີ ເຖິງ 02 ປີ | 30% -”- |
| ໄລຍະເກີນ 02 ປີ ເຖິງ 03 ປີ | 20% -”- |
| ຖ້າເກີນ 03 ປີ ຂຶ້ນໄປ | ບໍ່ໄດ້ສົ່ງຄືນຄ່າພາສີ ແລະ ພັນທະອື່ນໆ |

ຫຼັງຈາກລັດຖະການພາສີ ໄດ້ສົ່ງເງິນຄ່າພາສີ ແລະ ພັນທະອື່ນໆ ໃຫ້ຜູ້ນຳເຂົ້າເປັນທີ່ຮຽບຮ້ອຍແລ້ວ ສັນຍາຄ້ຳປະກັນກໍ່ຈະສິ້ນສຸດລົງ.

ໃນກໍລະນີ ຜູ້ນຳເຂົ້າບໍ່ປະຕິບັດຕາມສັນຍາທີ່ເຊັນໄວ້ນຳລັດຖະການພາສີ ໂດຍບໍ່ນຳເອົາພາຫະນະອອກຄືນ ຕາມເວລາທີ່ທາງການກຳນົດໃຫ້ ເງິນຄ່າພາສີ ແລະ ພັນທະອື່ນໆ ທີ່ເສຍໄວ້ໃນເວລານຳເຂົ້າ ຈະຖືກມອບເຂົ້າງົບປະມານໃນທັນທີ ແລະ ຍັງຈະຕ້ອງຖືກດຳເນີນຄະດີຖານລະເມີດລະບຽບການນຳເຂົ້າຊົ່ວຄາວ ພ້ອມທັງຖືກປັບໃໝໜຶ່ງເທົ່າຂອງຄ່າພາສີ ແລະ ພັນທະອື່ນໆທີ່ໄດ້ເສຍໃນເວລານຳເຂົ້າ ຊຶ່ງລະບຽບການດັ່ງກ່າວໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຫຼື ມາດຕະການອື່ນໆ ທີ່ລະບຽບກົດໝາຍກຳນົດໄວ້.

## ມາດຕາ 14. ການນຳເຂົ້າເຄື່ອງຈັກ, ອຸປະກອນ, ເຄື່ອງອາໄຫລ່, ເຄື່ອງໃຊ້ຫ້ອງການຊົ່ວຄາວ

ການນຳເຂົ້າຊົ່ວຄາວເຄື່ອງຈັກ, ອຸປະກອນ, ເຄື່ອງອາໄຫລ່, ເຄື່ອງໃຊ້ຫ້ອງການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂໍ້ 3.(ງ) ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ແມ່ນຕ້ອງປະຕິບັດດັ່ງນີ້:

1. ການນຳເຂົ້າເຄື່ອງຈັກ, ເຄື່ອງມື, ອຸປະກອນຮັບໃຊ້ການຜະລິດ, ສຳຫຼວດອອກແບບ, ກໍ່ສ້າງ ຫຼື ພັດທະນາໂຄງການ ຈະອະນຸຍາດສະເພາະແຕ່ວັດຖຸສິ່ງຂອງທີ່ມີອາຍຸການໃຊ້ງານ ຕະຫລອດໄລຍະອາຍຸຂອງໂຄງການ ແລະ ສາມາດນຳອອກຄືນໄດ້ ຕາມຈຳນວນ ແລະ ສະພາບເດີມຕາມສັນຍາຄ້ຳປະກັນເທົ່ານັ້ນ ເຊັ່ນ: ອຸປະກອນຫ້ອງທົດລອງ, ເຄື່ອງປັ່ນໄຟ, ປ້ຳນ້ຳ, ເຄື່ອງມືຊ່າງ, ເຄື່ອງສຳລອງໄຟ, ຖັງບັນຈຸນ້ຳ, ຖັງບັນຈຸນ້ຳມັນ, ຖັງຕົ້ມຢາງ, ປ້ຳລົມ, ເຄື່ອງຕັດເຫລັກ, ເລື່ອຍ, ເຄື່ອງເຈຍ, ເຫລັກແມ່ແບບ, ໂຄງ ເຫລັກນັ່ງຮ້ານ ແລະອື່ນໆ.

ສ່ວນວັດຖຸສິ່ງຂອງ, ວັດຖຸອຸປະກອນມາຮັບໃຊ້ໃນການກໍ່ສ້າງ ແລະ ສ້ອມແປງ ບໍ່ອະນຸຍາດ ນຳເຂົ້າຕາມລະບອບຊົ່ວຄາວ ແລະ ໃຫ້ເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການ, ເນື່ອງຈາກການໃຊ້ງານ ໃນໂຄງການນັ້ນໝົດໄປ ຫຼື ຫຼຸ້ຍຫ້ຽນໝົດໄປ ຈາກສະພາບເດີມ ແລະບໍ່ສາມາດກວດກາຢັ້ງຢືນຕາມຈຳນວນ ແລະ ສະພາບເດີມ ເພື່ອສົ່ງອອກຄືນໄດ້ນັ້ນ ເຊັ່ນ: ເຫຼັກເສັ້ນ, ຊີມັງ, ທູບ ຈອດ, ຫີນ ເຈຍ, ນ້ຳມັນຫຼໍ່ລື່ນທຸກຊະນິດ, ນ້ຳມັນເຊື້ອໄຟ ແລະ ອື່ນໆ.

2. ການນຳເຂົ້າເຄື່ອງອາໄຫລ່ສຳລັບປ່ຽນຖ່າຍ:

ເຄື່ອງອາໄຫລ່ສຳລັບປ່ຽນຖ່າຍອະນຸຍາດໃຫ້ນຳເຂົ້າສະເພາະ ແຕ່ເຄື່ອງອາໄຫລ່ ທີ່ມີອາຍຸການນຳໃຊ້ຍາວນານ ແລະ ບໍ່ມີການຫຼຸ້ຍຫ້ຽນຈາກສະພາບເດີມໝົດໄປ ເຊັ່ນ: ຕີນຊີເຊັບລົດດຸດ, ລົດຈົກ, ລົດຕັກ, ໜ່ວຍຈັກລົດ ເພື່ອປ່ຽນຖ່າຍຈັກລົດທີ່ເປ່ເພ, ມິດລົດເກດ, ລົດດຸດ, ຈານໄຖ, ບ່ວງຈົກ ແລະ ເຄື່ອງອາໄຫລ່ ຢູ່ພາຍນອກ ທີ່ສາມາດກວດກາຢັ້ງຢືນໄດ້ໃນເວລານຳອອກຄືນ ເທົ່ານັ້ນ.

ສ່ວນເຄື່ອງອາໄຫລ່ ທີ່ນຳໃຊ້ແລ້ວໝົດໄປ ຫຼື ຫຼຸ້ຍຫ້ຽນໝົດໄປຈາກສະພາບເດີມ ທີ່ບໍ່ສາມາດນຳອອກຄືນຕາມຈຳນວນ ແລະ ສະພາບເດີມໃນເວລານຳເຂົ້າໄດ້ ເນື່ອງຈາກການໃຊ້ງານໃນ

ໂຄງການນັ້ນ ເຊັ່ນ: ຢາງຕີນລົດ, ເຄື່ອງອາໄຫລ່ສຳລັບປ່ຽນຖ່າຍພາຍໃນຂອງເຄື່ອງຈັກ, ອຸປະກອນ ແລະ ອື່ນໆ ແມ່ນບໍ່ອະນຸຍາດນຳເຂົ້າຕາມລະບອບຊົ່ວຄາວ ແລະ ໃຫ້ເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການ.

3. ການນຳເຂົ້າເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໃຊ້ຄົວເຮືອນ:

ການນຳເຂົ້າເຄື່ອງໃຊ້ຫ້ອງການ ແລະເຄື່ອງໃຊ້ຄົວເຮືອນຈະອະນຸຍາດໃຫ້ນຳເຂົ້າຕາມລະບອບນຳເຂົ້າຊົ່ວຄາວໄດ້ ສະເພາະແຕ່ວັດຖຸສິ່ງຂອງທີ່ມີອາຍຸການໃຊ້ງານຍາວນານ ແລະ ສາມາດນຳອອກຄືນໄດ້ຕາມຈຳນວນ ແລະ ສະພາບເດີມເທົ່ານັ້ນ ເຊັ່ນ:

- ເຄື່ອງໃຊ້ຫ້ອງການ: ຄອມພິວເຕີ, ຈັກອັດເອກະສານ, ຈັກພິມດີດ, ເຄື່ອງແຟັກເອກະສານ, ຕູ້ໃສ່ເອກະສານ.

- ເຄື່ອງໃຊ້ຄົວເຮືອນ: ຕູ້ໃສ່ເຄື່ອງນຸ່ງ, ໂຕະ, ຕັ່ງ, ຕຽງນອນ ທີ່ເຮັດຈາກເຫຼັກ ຫຼື ໄມ້, ຊຸດເຄື່ອງ ປັບອາກາດທຳຄວາມເຢັນ, ຕູ້ເຢັນ ຫຼື ຕູ້ແຊ່ແຂງ, ພັດລົມ, ເຕົາອົບໄຟຟ້າ, ເຕົາແກັສ, ເຄື່ອງຈັກ ຊັກຜ້າ ແລະ ອື່ນໆ.

ສ່ວນວັດຖຸສິ່ງຂອງ ທີ່ນຳໃຊ້ແລ້ວໝົດໄປ ຫຼື ຫຼຸ້ຍຫຽ້ນໝົດໄປຈາກສະພາບເດີມ ທີ່ບໍ່ສາມາດນຳອອກຄືນ ຕາມຈຳນວນ ແລະ ສະພາບເດີມຄືກັບເວລານຳເຂົ້າໃນເບື້ອງຕົ້ນ. ແມ່ນບໍ່ອະນຸຍາດນຳເຂົ້າຕາມລະບອບຊົ່ວຄາວ ແລະ ໃຫ້ເສຍພາສີ ແລະ ພັນທະ ອື່ນໆ ຕາມລະບຽບການ.

ໃນກໍລະນີ ຜູ້ນຳເຂົ້າ ບໍ່ປະຕິບັດຕາມສັນຍາທີ່ເຊັນໄວ້ນຳລັດຖະການພາສີ ໂດຍບໍ່ນຳເອົາເຄື່ອງຈັກ, ອຸປະກອນ, ເຄື່ອງອາໄຫລ່, ເຄື່ອງໃຊ້ຫ້ອງການອອກຄືນ ຕາມເວລາທີ່ກຳນົດໄວ້ໃນສັນຍາຄ້ຳປະກັນ ຈະຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆຄົບຖ້ວນ ຕາມລະບຽບການ ຖານລະເມີດລະບຽບການນຳເຂົ້າຊົ່ວຄາວ ພ້ອມທັງຖືກປັບໃໝໜຶ່ງເທົ່າ ຂອງຄ່າພາສີ ແລະ ພັນທະອື່ນໆດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຫຼື ມາດຕະການອື່ນໆ ທີ່ລະບຽບກົດໝາຍກຳນົດໄວ້.

## ມາດຕາ 15.ການນຳເຂົ້າພາຫະນະ ເພື່ອການທ່ອງທ່ຽວຢ້ຽມຢາມ

ຜູ້ເດີນທາງເຂົ້າມາຊົ່ວຄາວໃນ ສປປລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂໍ້ 6 ຂອງກົດໝາຍວ່າດ້ວຍພາສີສະບັບເລກທີ 05/ສພຊ ລົງວັນທີ 20/05/2005 ທີ່ນຳພາຫານະເຂົ້າມາ ເພື່ອທ່ອງທ່ຽວ, ຢ້ຽມຢາມ ຫຼື ພົວພັນວຽກງານຢູ່ ສ.ປ.ປ.ລາວ ຈະຖືກງົດເກັບພາສີ ແລະ ພັນທະອື່ນໆ ແລະ ຕ້ອງນຳເຂົ້າ ຕາມດ່ານສາກົນເທົ່ານັ້ນ ແລະ ຕ້ອງຈ່າຍຄ່າທຳນຽມ ແລະ ພັນທະອື່ນໆ ຕາມລະບຽບການ ແລະ ເງື່ອນໄຂລຸ່ມນີ້:

- ຕ້ອງມີປື້ມອະນຸຍາດລົດຂົນສົ່ງລະຫວ່າງປະເທດ.

- ຕ້ອງແຈ້ງລາຍລະອຽດລົງໃນແບບຟອມ ທີ່ລັດຖະການພາສີກຳນົດໄວ້.

ພ້ອມຄັດຕິດເອກະ ສານ ທີ່ຈຳເປັນ (ເຊັ່ນ: ໃບປະກັນໄພ, ໃບກວດກາສະພາບເຕັກນິກຂອງລົດ, ໃບທະບຽນລົດ...) ຍື່ນຕໍ່ເຈົ້າໜ້າທີ່ພາສີ ເພື່ອພິຈາລະນາອະນຸມັດ:

+ ສຳລັບຜູ້ຂັບຂີ່ ທີ່ຖືໜັງສືຜ່ານແດນຖາວອນ ສາມາດນຳໃຊ້ພາຫະນະ ໄປ ມາຢູ່ ສປປລ ໄດ້ບໍ່ເກີນ ສາມສິບ ວັນ ຖ້າມີຄວາມຈຳເປັນ ແລະ ເຫດຜົນພຽງພໍ ສາມາດ ຕໍ່ອາຍຸຕື່ມໄດ້ສູງສຸດບໍ່ເກີນ ສາມສິບ ວັນ ແລະ ຕ້ອງນຳອອກຄືນ ຕາມດ່ານສາກົນເທົ່ານັ້ນ.

+ ສຳລັບຜູ້ຂັບຂີ່ ທີ່ຖືບັດຜ່ານແດນຊົ່ວຄາວ ສາມາດນຳໃຊ້ ພາຫະນະ ໄປມາຢູ່ ສປປລ ໄດ້ບໍ່ເກີນ ເຈັດ ວັນ ຖ້າມີຄວາມຈຳເປັນ ແລະ ເຫດຜົນພຽງພໍ ສາມາດ ຕໍ່ອາຍຸຕື່ມໄດ້ສູງສຸດບໍ່ເກີນ ເຈັດ ວັນ ໂດຍມີຂອບເຂດການນຳໃຊ້ ຕາມທີ່ລັດຖະບານ ໄດ້ກຳນົດ ແລະ ຕ້ອງນຳອອກຄືນໄດ້ສະເພາະແຕ່ດ່ານສາກົນຢູ່ແຂວງ ທີ່ນຳເຂົ້າເທົ່ານັ້ນ.

- ໃນກໍລະນີ ທີ່ມີການຂໍຕໍ່ອະນຸຍາດ ຜູ້ຂັບຂີ່ຕ້ອງນຳເອົາພາຫະນະ ແລະ ໃບແຈ້ງພາສີສຳລັບພາຫະນະນຳເຂົ້າ ເພື່ອສະເໜີຕໍ່ດ່ານພາສີ ບ່ອນນຳເຂົ້າ, ຫ້ອງການພາສີປະຈຳເຂດ ແລະ ບັນດາດ່ານພາສີ ບ່ອນໃກ້ສຸດ ຫຼື ກົມພາສີ ແຕ່ຕ້ອງມີການຄ້ຳປະກັນຈາກການຈັດຕັ້ງ, ນິຕິບຸກ ຄົນ ຫຼື ບຸກຄົນທີ່ເຊື່ອຖືໄດ້ ເພື່ອພິຈາລະນາ.

ເມື່ອກາຍກຳນົດເວລາອະນຸຍາດທີ່ໄດ້ກຳນົດໄວ້ໃນໃບແຈ້ງພາສີ ສຳລັບພາຫະນະນຳເຂົ້າ ແຕ່ຜູ້ຂັບຂີ່ນຳເອົາພາຫະນະອອກຄືນບໍ່ທັນ ພາຍໃນກຳນົດເວລາທີ່ອະນຸຍາດໃຫ້ ໂດຍບໍ່ມີເຈດຕະນາລະເມີດ ຊຶ່ງມີເອກະສານຢັ້ງຢືນທີ່ເຊື່ອຖືໄດ້ ຈະໄດ້ຈ່າຍຄ່າພັນທະອື່ນໆເພີ່ມເທົ່າກັບ ຫ້າ ໂດລາ ສະຫະລັດຕໍ່ວັນ ນັບແຕ່ວັນທີ່ກາຍກຳນົດຮອດວັນແຈ້ງອອກຄືນ ຍົກເວັ້ນກໍລະນີເກີດເຫດສຸດວິໄສ, ຖ້າມີເຈດຕະນາລະເມີດຈະຖືກປັບໃໝ ສິບ ໂດລາ ສະຫະລັດຕໍ່ວັນ.

- ໃນກໍລະນີ ມີການລະເມີດລະບຽບການນຳເຂົ້າຊົ່ວຄາວດັ່ງກ່າວ ເມື່ອເຈົ້າໜ້າທີ່ພາສີ ກວດພົບເຫັນ ເຊັ່ນວ່າ: ມີການລັກຂາຍ, ແລກປ່ຽນ, ຊວດຈຳ ຫຼື ໂອນໃຫ້ຜູ້ອື່ນນຳໃຊ້ບໍລິການໃຫ້ເຊົ່າ, ຂົນສົ່ງໂດຍສານ, ຂົນສົ່ງສິນຄ້າ, ເຄື່ອງຂອງ ແລະ ອື່ນໆ ພາຫະນະດັ່ງກ່າວ ຈະຖືກຢຶດໄວ້ ເພື່ອ ດຳເນີນຄະດີໃນການສົ່ງພາຫະນະອອກນອກປະເທດ, ຖ້າບໍ່ສາມາດນຳສົ່ງອອກນອກປະເທດໄດ້ນັ້ນ ພາຫະນະດັ່ງກ່າວ ຈະຕົກເປັນຂອງລັດ ແລ້ວນຳອອກປະມູນຂາຍຕາມລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 41 ແລະ 42 ຂອງ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005.

## ມາດຕາ 16. ການຍົກເວັ້ນພາສີ ແລະ ພັນທະອື່ນໆທົ່ວໄປ

ການຍົກເວັ້ນທົ່ວໄປ ແມ່ນໄດ້ກຳນົດໄວ້ໃນມາດຕາ 43 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ເຊິ່ງການກຳນົດລາຍລະອຽດ ກ່ຽວກັບສິນຄ້າ, ເຄື່ອງຂອງ ທີ່ຈະໄດ້ຮັບນະໂຍບາຍ ກ່ຽວກັບການ ຍົກເວັ້ນພາສີ ແລະ ພັນທະອື່ນໆ ມີດັ່ງນີ້:

- ສຳລັບສະບຽງອາຫານບາງຊະນິດຂອງຜູ້ເດີນທາງ, ຂອງນັກທ່ອງທ່ຽວ ຕ້ອງຢູ່ໃນບໍລິມາດ ແລະ ປະລິມານທີ່ຈຳເປັນໃຫ້ແກ່ການດຳລົງຊີວິດສຳລັບ ສາມ ວັນ ຂອງແຕ່ລະຄົນເທົ່ານັ້ນ ແລະ ເປັນສະບຽງອາຫານທີ່ປອດເຊື້ອໂລກ;
- ເຄື່ອງປະດັບເອ້ຢ້ອງທີ່ຕິດຕົວຜູ້ໂດຍສານ;
- ເຫຼົ້າບໍ່ໃຫ້ເກີນໜຶ່ງລິດ ແລະ ເຫຼົ້າແວງບໍ່ໃຫ້ເກີນສອງລິດ;
- ຢາສູບໜຶ່ງຕຸດ (200 ກອກ) ຫຼື ຢາສູບຊີກາຣ 50 ກອກ ຫຼື ໃບຢາສູບ 250 ກຣາມ;
- ທົ່ວນ້ຳຫອມ ແລະ ນ້ຳຫອມ ຢ່າງລະໜຶ່ງຊະນິດ;
- ກ້ອງຖ່າຍຮູບ ຫຼື ກ້ອງຖ່າຍວີດີໂອ ທີ່ໃຊ້ແລ້ວ ໜຶ່ງອັນພ້ອມດ້ວຍຟີມ 10 ມ້ວນ;
- ລົດຍູ້ສຳລັບເດັກອ່ອນ ທີ່ໃຊ້ແລ້ວ ບໍ່ເກີນ 2 ຄັນ;
- ຄອມພິວເຕີສ່ວນຕົວ ທີ່ໃຊ້ແລ້ວ ໜຶ່ງໜ່ວຍ ;

- ໂທລະສັບມືຖື ທີ່ໃຊ້ແລ້ວ ບໍ່ເກີນສອງໜ່ວຍ;

- ສິນຄ້າ, ເຄື່ອງຂອງຕ່າງໆ ທີ່ບໍ່ມີລັກສະນະທາງການຄ້າ ແລະ ມີມູນຄ່າບໍ່ເກີນ 50 ໂດລາສະຫະລັດ;

- ວັດຖຸສິ່ງຂອງທີ່ໄດ້ມາຈາກການສືບທອດມູນມໍລະດົກ ທີ່ນໍາເຂົ້າມາ ສ.ປ.ປ.ລາວ ຊຶ່ງມີໃບຢັ້ງຢືນມອບກໍາມະສິດຈາກເຈົ້າຂອງມູນມໍລະດົກ ໂດຍມີການຢັ້ງຢືນຢ່າງເປັນທາງການ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ປະເທດຜູ້ກ່ຽວມີພູມລໍາເນົາຕັ້ງຢູ່ ຈະໄດ້ຮັບພິຈາລະນາໃຫ້ຍົກເວັ້ນພາສີ ແລະ ພັນທະອື່ນໆ, ສ່ວນການນໍາເຂົ້າພາຫະນະ ທີ່ຂັບເຄື່ອນດ້ວຍແຮງຈັກ ເຊັ່ນ: ລົດຈັກ, ລົດເກງ, ລົດຈິບ, ລົດກະບະ, ລົດຕູ້, ລົດຂົນສົ່ງ ແລະ ອື່ນໆ ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການ;

- ນໍ້າມັນເຊື້ອໄຟຄ້າງຖັງສະເພາະລົດຂົນສົ່ງ, ລົດໂດຍສານ ທີ່ມາຈາກຕ່າງປະເທດ ບໍ່ເກີນ 200 ລິດ, ລົດໂອໂຕສ່ວນບຸກຄົນ ຫຼື ລົດຖ້າຍຄື ບໍ່ເກີນ 80 ລິດ ຕໍ່ຄັນ ແລະ ຕໍ່ຖ້ຽວ;

- ເຄື່ອງຂອງສ່ວນຕົວບາງຊະນິດ ແລະ ບາງຈໍານວນ (ນອກຈາກພາຫະນະທີ່ຂັບເຄື່ອນດ້ວຍແຮງຈັກ) ຂອງນັກຮຽນ, ນັກສຶກສາ, ລັດຖະກອນ ແລະ ນັກການທູດລາວ ທີ່ນໍາເຂົ້າມາພາຍຫຼັງ ສິ້ນສຸດການສຶກສາ ແລະ ໜ້າທີ່ຢູ່ຕ່າງປະເທດ ຈະໄດ້ຮັບການຍົກເວັ້ນພາສີ ແລະ ພັນທະອື່ນໆ ຊະນິດລະໜຶ່ງຢ່າງ , ນອກຈາກພາຫະນະ ທີ່ຂັບເຊື່ອນດວ້ຍແຮງຈັກ ເຊັ່ນ :ລົດຈັກ ລົດເກັງ,ລົດຈິບ,ລົດກະບະ,ລົດຕູ້,ລົດຂົນສົ່ງ ແລະ ອື່ນໆ ຕອ້ງໄດ້ເສັຍພາສີ ແລະ ພັນທະອື່ນໆ ຕາມລະບຽບການ.

- ການຊ່ວຍເຫຼືອເພື່ອມະນຸດສະທໍາ ແຕ່ຕ້ອງຜ່ານຂະແໜງການກ່ຽວຂ້ອງ;

- ຂອງຂວັນ, ເຄື່ອງຊ່ວຍເຫຼືອ, ກູ້ຢືມ ຫຼື ຊໍາລະໜີ້ສິນ ຈາກຕ່າງປະເທດໃຫ້ແກ່ລັດຖະບານ ສ.ປ.ປ.ລາວ;

- ເຄື່ອງຮັບໃຊ້ ແລະ ພາຫະນະວິຊາສະເພາະ ສໍາລັບນໍາໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

- ເຄື່ອງໃຊ້ອັນຈໍາເປັນບາງຊະນິດ ທາງສາດສະໜາທີ່ບໍ່ຂັດກັບນະໂຍບາຍທີ່ລັດວາງອອກ ແລະ ບໍ່ສົ່ງຜົນສະທ້ອນເຖິງເສດຖະກິດ ແລະ ສັງຄົມຂອງຊາດ ແຕ່ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງ;ກະຊວງການເງິນ ເປັນຜູ້ກໍານົດລະອຽດກ່ຽວກັບລາຍການສິນຄ້າ, ເຄື່ອງຂອງທີ່ຖືກຍົກ ເວັ້ນພາສີ ເປັນແຕ່ລະໄລຍະ.

## ມາດຕາ 17. ການຍົກເວັ້ນ ຫຼື ງົດເກັບພາສີທາງການທູດ ແລະ ອົງການຈັດຕັ້ງສາກົນ

ວັດຖຸອຸປະກອນ, ເຄື່ອງຂອງ ຮັບໃຊ້ຂອງບັນດາສະຖານທູດ ແລະ ອົງການຈັດຕັ້ງສາກົນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 45 ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຈະໄດ້ຮັບການຍົກເວັ້ນພາສີ ແລະ ງົດເກັບພາສີ ແລະ ພັນທະອື່ນໆ ຕາມການອະນຸມັດ ຂອງກະຊວງການຕ່າງປະເທດແຫ່ງ ສ.ປ.ປ.ລາວ ໂດຍສອດຄ່ອງກັບສົນທິສັນຍາແຫ່ງກຸງວຽນ ວ່າດ້ວຍການພົວພັນທາງການທູດ ສະບັບລົງວັນທີ 18.04.1961 ແລະ ສັນຍາທີ່ໄດ້ເຊັນກັນລະຫວ່າງລັດ ຖະບານ ສ.ປ.ປ.ລາວ ກັບ ອົງການຈັດຕັ້ງຕ່າງໆຂອງຕ່າງປະເທດ ເຊັ່ນ: ເຄື່ອງຂອງ, ພາຫະນະທີ່ ຮັບໃຊ້ໃນວຽກທາງການຂອງສະຖານທູດ ແລະ ອົງການຈັດຕັ້ງສາ

ກົນ. ເຄື່ອງຂອງ ເພື່ອໃຊ້ສ່ວນຕົວຂອງນັກການທູດ, ພະນັກງານອົງການຈັດຕັ້ງສາກົນ, ຊ່ຽວຊານຕ່າງປະເທດ ຫຼື ສະມາຊິກ ຄອບຄົວ ລວມທັງເຄື່ອງຂອງທີ່ໃຊ້ໃນການຕັ້ງຄອບຄົວ.

ການງົດເກັບພາສີ ຕາມລະບຽບການແລ້ວ ແມ່ນມີກຳນົດບໍ່ເກີນ 02 ປີ ແຕ່ສາມາດຕໍ່ໄດ້ຄັ້ງລະ 02 ປີ ຫຼື ຕາມການອະນຸມັດຂອງກະຊວງການຕ່າງປະເທດ. ເມື່ອໝົດກຳນົດດັ່ງກ່າວ ຫຼື ໝົດໜ້າທີ່ຢູ່ ສ.ປ.ປ.ລາວ ຕ້ອງນຳອອກຄືນຕາມຈຳນວນ ແລະ ສະພາບເດີມ, ທຸກໆການມອບໂອນ ຫຼື ປ່ຽນກຳມະສິດ ຕ້ອງຂໍອະນຸຍາດຈາກກະຊວງການຕ່າງປະເທດຂອງສ.ປ.ປ.ລາວ ແລະ ປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ. ສ່ວນການ ຂາຍ-ມອບໂອນໃຫ້ບຸກຄົນທົ່ວໄປ ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆ ຕາມມູນຄ່າຂອງພາຫະນະ ແລະ ເຄື່ອງຂອງທີ່ຍັງເຫຼືອ ແລະ ຕາມອັດຕາພາສີ ແລະ ພັນທະອື່ນໆ ໃນວັນທີ່ໄດ້ບັນທຶກໃບແຈ້ງພາສີເປັນລາຍລະອຽດຂອງເຈົ້າໜ້າທີ່ພາສີ.

## ມາດຕາ 18. ການຍົກເວັ້ນ ຫຼື ຫຼຸດຜ່ອນ ຕາມນະໂຍບາຍສົ່ງເສີມການລົງທຶນ

ການນຳເຂົ້າສິນຄ້າ, ເຄື່ອງຂອງ ຕາມນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005 ຊຶ່ງການອອກໃບຍົກເວັ້ນ ຫຼື ຫຼຸດຜ່ອນ ຈະອີງຕາມລະບຽບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ແລະ ຢູ່ພາຍໃຕ້ການຄຸ້ມຄອງກວດກາຂອງເຈົ້າໜ້າທີ່ພາສີ.

ສິນຄ້າ, ເຄື່ອງຂອງນຳເຂົ້າຕາມນະໂຍບາຍຍົກເວັ້ນ ຫຼື ຫຼຸດຜ່ອນ ເພື່ອສົ່ງເສີມການລົງທຶນຫ້າມຊື້-ຂາຍ, ໂອນ, ແລກປ່ຽນ, ຊວດຈຳ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງແຕ່ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນໆຢ່າງຄົບຖ້ວນຕາມລະບຽບການ. ຖ້າຫາກມີການຊື້-ຂາຍ, ໂອນ, ແລກປ່ຽນ, ຊວດຈຳ ໂດຍບໍ່ໄດ້ຮັບອະນຸຍາດ ຕ້ອງໄດ້ເສຍພາສີ ແລະພັນທະອື່ນໆຢ່າງຄົບຖ້ວນຕາມລະບຽບການ ພ້ອມທັງເສຍຄ່າປັບໃໝໜຶ່ງເທົ່າຂອງຄ່າພາສີ ແລະ ພັນທະອື່ນໆ ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີ ເລກທີ 05/ສພຊ, ລົງວັນທີ 20/05/2005.

## ມາດຕາ 19. ການປັບໃໝຕໍ່ຜູ້ກະທຳຜິດສະຖານເບົາລະດັບທີໜຶ່ງ

ຜູ້ກະທຳຜິດທາງພາສີໂດຍເຈດຕະນາ ແຕ່ບໍ່ມີຜົນສະທ້ອນຕໍ່ຄ່າພາສີ ແລະ ພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນ ທີ 20.05.2005 ຈະຖືກສຶກສາອົບຮົມກ່າວເຕືອນ ພ້ອມທັງເສຍຄ່າປັບໃໝຕາມມູນຄ່າ ລວມຄ່າພາສີ ແລະ ພັນທະອື່ນໆ ຕໍ່ໜຶ່ງຄະດີ ຕາມມູນຄ່າທີ່ໄດ້ກຳນົດດັ່ງລຸ່ມນີ້:

1. ການປັບໃໝສຳລັບສິນຄ້າທົ່ວໄປ:

- ລວມຄ່າພາສີ ແລະ ພັນທະອື່ນໆ ແຕ່ 10.000.000 ກີບ ລົງມາ ເສຍຄ່າປັບໃໝເທົ່າກັບ 150.000 ກີບ.
- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 10.000.000 ກີບ ຫາ 20.000.000 ກີບ ເສຍຄ່າປັບໃໝເທົ່າກັບ 200.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 20.000.000 ກີບ ຫາ 30.000.000 ກີບ ເສຍຄ່າປັບໃໝເທົ່າກັບ 300.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 30.000.000 ກີບ ຫາ 40.000.000 ກີບ ເສຍຄ່າປັບໃໝເທົ່າກັບ 400.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 40.000.000 ກີບ ຫາ 50.000.000 ກີບ ເສຍຄ່າປັບໃໝເທົ່າກັບ 500.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 50.000.000 ກີບ ຫາ 60.000.000 ກີບ ເສຍຄ່າປັບໃໝເທົ່າກັບ 600.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 60.000.000 ກີບ ຫາ 70.000.000 ກີບ ເສຍຄ່າປັບໃໝເທົ່າກັບ 700.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 70.000.000 ກີບ ຫາ 80.000.000 ກີບ ເສຍຄ່າປັບໃໝເທົ່າກັບ 800.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 80.000.000 ກີບ ຫາ 90.000.000 ກີບ ເສຍຄ່າປັບໃໝເທົ່າກັບ 900.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 90.000.000 ກີບ ຫາ 100.000.000 ກີບ ເສຍຄ່າປັບໃໝເທົ່າກັບ 1.000.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 100.000.000 ກີບ ຫາ 150.000.000 ກີບ ເສຍຄ່າປັບໃໝເທົ່າກັບ 1.500.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 150.000.000 ກີບ ຫາ 200.000.000 ກີບ ເສຍຄ່າປັບໃໝເທົ່າກັບ 2.000.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 200.000.000 ກີບ ຫາ 250.000.000 ກີບ ເສຍຄ່າປັບໃໝເທົ່າກັບ 2.500.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 250.000.000 ກີບ ຫາ 300.000.000 ກີບ ເສຍຄ່າປັບໃໝເທົ່າກັບ 3.000.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 350.000.000 ກີບ ຫາ 400.000.000 ກີບ ເສຍຄ່າປັບໃໝເທົ່າກັບ 3.500.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 400.000.000 ກີບ ຫາ 450.000.000 ກີບ ເສຍຄ່າປັບໃໝເທົ່າກັບ 4.000.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 450.000.000 ກີບ ຫາ 500.000.000 ກີບ ເສຍຄ່າປັບໃໝເທົ່າກັບ 4.500.000 ກີບ.

- ລວມຄ່າພາສີ ແລະ ພັນທະອື່ນໆ ເກີນ 500.000.000 ກີບ ຂຶ້ນໄປເສຍຄ່າປັບໃໝເທົ່າກັບ 5.000.000 ກີບ.

2. ການປັບໃໝສຳລັບພາຫະນະ:

| ປະເພດລົດທີ່ນຳເຂົ້າແບບ CKD ແລະ CBU | ຈຳນວນເງິນ |
|---|---|
| ລົດຈັກທຸກຊະນິດ | 150.000ກີບ/ຄັນ |
| ລົດຈັກສາມລໍ້ ແລະ ສີ່ລໍ້ | 200.000ກີບ/ຄັນ |
| ລົດບັນທຸກ | 600.000ກີບ/ຄັນ |
| ລົດກົນຈັກໜັກ | 400.000ກີບ/ຄັນ |
| ລົດຕູ້ | 800.000ກີບ/ຄັນ |
| ລົດບັສ 24 ບ່ອນນັ່ງລົງມາ | 1.000.000ກີບ/ຄັນ |
| ລົດບັສ ເກີນ 24 ບ່ອນນັ່ງຂຶ້ນໄປ | 1.200.000ກີບ/ຄັນ |
| ລົດກະບະ | 1.100.000ກີບ/ຄັນ |
| ລົດຈິບ | 1.200.000ກີບ/ຄັນ |
| ລົດເກງ | 1.500.000ກີບ/ຄັນ |

## ມາດຕາ 20. ການປັບໃໝຕໍ່ພາຫະນະທີ່ບັນທຸກສິນຄ້າຜິດກົດໝາຍ

ປະເພດພາຫະນະທີ່ບັນທຸກສິນຄ້າຜິດກົດໝາຍວ່າດ້ວຍພາສີ ທີ່ກຳນົດໄວ້ໃນມາດຕາ 52,53 ແລະ 54 ຈະຕ້ອງຖືກປັບໃໝຕາມກໍລະນີລຸ່ມນີ້ :

- ກໍລະນີໃຫ້ການຮ່ວມມືຕໍ່ເຈົ້າໜ້າທີ່ພາສີ ຈະຖືກປັບໃໝເປັນຈຳນວນເງິນ ຄັນລະ 500.000 ກີບ.

- ກໍລະນີລົບກວນ, ສ້າງຄວາມຫຍຸ້ງຍາກ ຫຼື ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ພາສີ ຈະຖືກປັບໃໝ ເປັນເງິນ ຄັນລະ 1.500.000 ກີບ.

- ກໍລະນີມີການກະທຳຜິດຕາມຄວາມຜິດທີ່ກຳນົດໄວ້ໃນມາດຕາ 54 ຂອງກົດໝານວ່າດ້ວຍພາສີ ຈະຖືກປັບໃໝ ຄັນລະ 5.000.000 ກີບ.

- ກໍລະນີມີການກະທຳຜິດຊ້ຳອີກຈະຖືກປັບໃໝຕາມທະວີຄູນຂອງການກະທຳຜິດ.

## ມາດຕາ 21. ໂຄງປະກອບການຈັດຕັ້ງຂອງລັດຖະການພາສີ

**ລັດຖະການພາສີ** ແມ່ນການຈັດຕັ້ງໜຶ່ງ ທີ່ຂຶ້ນກັບ ກະຊວງການເງິນ ຊຶ່ງມີລະບົບການຈັດຕັ້ງແຕ່ສູນກາງລົງຮອດທ້ອງຖິ່ນ ແລະ ມີກົງຈັກການຈັດຕັ້ງ ຄື :

- ຂັ້ນສູນກາງເອີ້ນວ່າ: ກົມພາສີ ;

- ຂັ້ນທ້ອງຖິ່ນຂຶ້ນກັບກົມພາສີ ປະກອບມີ : ພາສີປະຈຳເຂດ, ດ່ານພາສີຊາຍແດນ, ໜ່ວຍພາສີເຄື່ອນທີ່ ແລະ ປ້ອມພາສີ.

ສ່ວນການປະກອບ ແລະ ແຕ່ງຕັ້ງບຸກຄະລາກອນໃນແຕ່ລະຕຳແໜ່ງງານແມ່ນອີງໃສ່ກົດໝາຍວ່າດ້ວຍລັດຖະບານ, ກົດໝາຍອີງການປົກຄອງທ້ອງຖິ່ນ, ລະບຽບລັດຖະກອນແຫ່ງ ສປປລາວ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

## ມາດຕາ 22. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 89 ຂອງກົດໝາຍ ວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20.05.2005. ເຈົ້າໜ້າທີ່ພາສີ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ທີ່ໄດ້ປະກອບສ່ວນ ດ້ວຍຄວາມສ່ຽງເຂົ້າໃນການຕ້ານ ແລະ ການສະກັດກັ້ນການລັກລອບສິນຄ້າຫຼົບຫຼີກພາສີ, ການຄ້າຂາຍເຖື່ອນດ້ວຍການໃຫ້ຂໍ້ມູນ, ຂ່າວສານ, ເຂົ້າຮ່ວມການຈັບກຸມ ທາງກົງ ຫຼື ທາງອ້ອມ ກ່ຽວກັບການລະເມີດລະບຽບກົດໝາຍພາສີ ຈະໄດ້ຮັບຄ່າຕອບແທນໃນຮູບການໃຫ້ບຳເນັດ ຫຼື ວັດຖຸອື່ນໆ ຫຼື ຄຳຍ້ອງຍໍຊົມເຊີຍຈາກການຈັດຕັ້ງທີ່ກ່ຽວຂ້ອງຂອງລັດຂັ້ນຕ່າງໆ ເຊັ່ນ: ໃບຍ້ອງຍໍ, ຊົມເຊີຍ, ຫຼຽນໄຊ, ຫຼຽນກາ, ເລື່ອນຊັ້ນ, ເລື່ອນຂັ້ນ, ຫຼື ໄດ້ຮັບການອຸດໜູນເບິ່ງແຍງໃນກໍລະນີເສຍອົງຄະ ຫຼື ເສຍຊີວິດໃນການປະຕິບັດໜ້າທີ່.

ຈຳນວນເງິນທີ່ໄດ້ມາຈາກການປັບໃໝ ແລະ ຂາຍເຄື່ອງຮິບ ອະນຸຍາດໃຫ້ຫັກໄວ້ 40% ເພື່ອເປັນຄັງບຳເນັດ ແລະ ຈັດແບ່ງຕາມລະບຽບການ, ສ່ວນ 60% ແມ່ນມອບເຂົ້າງົບປະມານແຫ່ງລັດຢ່າງຄົບຖ້ວນ

ມອບໃຫ້ກະຊວງການເງິນ ເປັນຜູ້ກຳນົດລະບຽບການລະອຽດໃນການຈັດຕັ້ງປະຕິບັດ.

## ມາດຕາ 23. ການຈັດຕັ້ງປະຕິບັດ

ກະຊວງການເງິນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດດຳລັດສະບັບນີ້ຕາມໜ້າທີ່ຂອງໃຜລາວ ຢ່າງເຂັ້ມງວດ.

## ມາດຕາ 24. ຜົນສັກສິດ

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບເລກທີ 01/ນຍ, ລົງວັນທີ 01 ມັງກອນ 1995 ແລະ ມີຜົນສັກສິດ ພາຍຫຼັງ ສາມສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ທຸກຂໍ້ກຳນົດ ແລະ ກົດລະບຽບ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

[Stamp: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນາຍົກລັດຖະມົນຕີ] [Signature]

ບົວສອນ ບຸບຜາວັນ